ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 112 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20.06.2017.

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບ ປະຊາຊົນ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 07/ສພຊ, ລົງວັນທີ 09 ພຶດສະພາ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 012/ຄປຈ, ລົງວັນທີ 07 ມິຖຸນາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 07 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 09/05/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ສະບັບປັບປຸງ)

---

ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍ ຂອງ ວັນທີ 09 ພຶດສະພາ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມຫງົບປະຊາຊົນ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 20 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 09 ພຶດສະພາ 2017

# ກົດໝາຍວ່າດ້ວຍ
# ກຳລັງປ້ອງກັນຄວາມສະຫງົບປະຊາຊົນ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ເພື່ອຮັບປະກັນໃຫ້ກຳລັງດັ່ງກ່າວ ມີຄວາມໜັກແໜ້ນ ທາງດ້ານການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ມີຄວາມຊຳນານທາງດ້ານວິຊາສະເພາະ, ມີແບບແຜນວິທີເຮັດວຽກທີ່ກ້າວໜ້າ ແລະ ທັນສະໄໝ ແນໃສ່ເຮັດສຳເລັດໜ້າທີ່ໃນການປົກປັກຮັກສາສະຖຽນລະພາບທາງດ້ານການເມືອງ,ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແມ່ນ ກຳລັງປະກອບອາວຸດ, ມາຈາກປະຊາຊົນ, ໂດຍປະຊາຊົນ, ຮັບໃຊ້ປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ຊຶ່ງຢູ່ໃຕ້ການຊີ້ນຳ, ນຳພາເດັດຂາດ, ໂດຍກົງຮອບດ້ານຂອງພັກປະຊາຊົນປະຕິວັດລາວ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງລັດ, ມີພາລະບົດບາດ ປົກປັກຮັກສາສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຊຶ່ງປະກອບມີ ກຳລັງປ້ອງກັນຄວາມສະຫງົບອາຊີບ ແລະ ເຄິ່ງອາຊີບ.

ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນາຍ ແລະ ພົນຕໍາຫຼວດ** ໝາຍເຖິງ ກໍາລັງປ້ອງກັນຄວາມສະຫງົບອາຊີບ;

2. **ນາຍຕໍາຫຼວດ** ໝາຍເຖິງ ກໍາລັງປ້ອງກັນຄວາມສະຫງົບອາຊີບ ຜູ້ມີຊັ້ນແຕ່ ຮ້ອຍຕີ ເຖິງ ນາຍພົນ;

3. **ພົນຕໍາຫຼວດ** ໝາຍເຖິງ ກໍາລັງປ້ອງກັນຄວາມສະຫງົບອາຊີບ ຜູ້ມີຊັ້ນແຕ່ ຊັ້ນສອງ ເຖິງ ວາທີຮ້ອຍຕີ;

4. **ຊັ້ນສອງ** ໝາຍເຖິງ ຊັ້ນຕໍ່າສຸດຂອງກໍາລັງປ້ອງກັນຄວາມສະຫງົບອາຊີບ;

5. **ວາທີຮ້ອຍຕີ** ໝາຍເຖິງ ຊັ້ນກຽມຂຶ້ນຮ້ອຍຕີ;

6. **ກໍາລັງປ້ອງກັນຄວາມສະຫງົບກຸ່ມບ້ານ** ໝາຍເຖິງ ກໍາລັງອາຊີບຊຶ່ງປະຕິບັດໜ້າທີ່ຢູ່ຕາມກຸ່ມບ້ານ ທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ;

7. **ກໍາລັງປ້ອງກັນຄວາມສະຫງົບບ້ານ** ໝາຍເຖິງ ກໍາລັງເຄິ່ງອາຊີບທີ່ເຮັດວຽກງານປ້ອງກັນຄວາມສະຫງົບຢູ່ບ້ານ ແລະ ມີເຄື່ອງແບບສະເພາະ;

8. **ອາຊະຍາກໍາ** ໝາຍເຖິງ ການກະທໍາຜິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກໍານົດໂທດທາງອາຍາ;

9. **ທາດແຕກ** ໝາຍເຖິງ ທາດເຄມີທີ່ພາໃຫ້ເກີດປະຕິກິລິຍາກໍ່ໃຫ້ເກີດການໄໝ້, ລະເບີດ ແລະ ເປັນພິດ;

10. **ສັດວິຊາສະເພາະ** ໝາຍເຖິງ ສັດລ້ຽງທີ່ໄດ້ຮັບການຝຶກແອບ ເພື່ອນໍາໃຊ້ເຂົ້າໃນວຽກງານເຫຼົ່າວິຊາສະເພາະຕ່າງໆ ໃນກໍາລັງປ້ອງກັນຄວາມສະຫງົບ.

ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດຕໍ່ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ

ລັດ ໃຫ້ຄວາມສໍາຄັນໃນການສ້າງ ແລະ ພັດທະນາກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ເຕີບໃຫຍ່ເຂັ້ມແຂງຮອບດ້ານ, ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ຄວາມຮູ້, ຄວາມສາມາດປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບ ຢ່າງຕັ້ງໜ້າ.

ລັດ ກໍ່ສ້າງພື້ນຖານໂຄງລ່າງ, ສະໜອງທີ່ດິນ, ງົບປະມານ, ພາຫະນະ, ວັດຖຸປະກອນ, ເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ, ອາວຸດຍຸດໂທປະກອນ ແລະ ແກ້ໄຂຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈ ໃຫ້ແກ່ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານວິຊາສະເພາະ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນແຕ່ລະໄລຍະ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.

### ມາດຕາ 5 (ປັບປຸງ) ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວ

ໃນການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຢູ່ພາຍໃຕ້ການ ຊີ້ນຳ, ນຳພາ ເດັດຂາດ, ໂດຍກົງ ແລະ ຮອບດ້ານຂອງພັກປະຊາຊົນປະຕິວັດລາວ;

2. ຊີ້ນຳ, ນຳພາ ແລະ ກວດກາ ໂດຍຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຕ່ລະຂັ້ນ;

3. ປະທານປະເທດ ເປັນຜູ້ບັນຊາການສູງສຸດ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

4. ນາຍົກລັດຖະມົນຕີ ເປັນຜູ້ຊີ້ນຳ, ອຳນວຍຄວບຄຸມ, ຕິດຕາມ ແລະ ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

5. ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ບັນຊາໂດຍກົງ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ທັງເປັນຜູ້ຈັດຕັ້ງຊີ້ນຳ, ນຳພາ, ບັນຊາ, ຄຸ້ມຄອງ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

6. ນາຍ ແລະ ພົນຕຳຫຼວດ ຜູ້ທີ່ມີຕຳແໜ່ງ ຫຼື ຊັ້ນສູງກວ່າ ແມ່ນ ຂັ້ນເທິງຂອງນາຍ ແລະ ພົນຕຳຫຼວດຜູ້ທີ່ມີຕຳແໜ່ງ ຫຼື ຊັ້ນຕ່ຳກວ່າ, ຜູ້ທີ່ມີຕຳແໜ່ງສູງກວ່າ ແຕ່ມີຊັ້ນເທົ່າກັນ ຫຼື ຕ່ຳກວ່າ ແມ່ນຂັ້ນເທິງຂອງຜູ້ທີ່ມີຊັ້ນເທົ່າກັນ ຫຼື ສູງກວ່າ;

7. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ຢ່າງເຂັ້ມງວດ;

8. ປະຕິບັດລະບອບທິວໜ້າດຽວ, ລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ຕິດຕາມ ກວດກາ, ພິຈາລະນາຕົກລົງວຽກງານຕາມສຽງສ່ວນຫຼາຍ, ບຸກຄົນຂຶ້ນກັບການຈັດຕັ້ງ ແລະ ຂັ້ນລຸ່ມ ຂຶ້ນກັບຂັ້ນເທິງ;

9. ລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ບົນພື້ນຖານແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ປະສານສົມທົບຢ່າງກົມກຽວ ລະຫວ່າງສູນກາງ ແລະ ທ້ອງຖິ່ນ;

10. ກະທັດຮັດ, ມີປະສິດທິພາບ, ທັນສະໄໝ, ເປີດເຜີຍ, ໂປ່ງໃສ, ຍຸຕິທຳ, ພາວະວິໄສ ແລະ ສາມາດກວດກາໄດ້ ໂດຍອີງໃສ່ປະຊາຊົນ ແລະ ຢູ່ພາຍໃຕ້ການກວດກາຂອງປະຊາຊົນ;

11. ຮັບປະກັນຄວາມລັບຂອງຊາດ, ຂອງວຽກງານປ້ອງກັນຄວາມສະຫງົບ.

### ມາດຕາ 6 (ປັບປຸງ) ພັນທະຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີພັນທະ ດັ່ງນີ້:

1. ປົກປັກຮັກສາ ພັກປະຊາຊົນປະຕິວັດລາວ ແລະ ລັດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທັງເຂົ້າຮ່ວມໃນການສ້າງສາພັດທະນາປະເທດຊາດ;

2. ປົກປ້ອງອຸດົມການສັງຄົມນິຍົມ, ຮັບໃຊ້ປະເທດຊາດ ແລະ ປະຊາຊົນ ດ້ວຍຄວາມສັດຊື່ບໍລິສຸດ;

3. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ;

4. ຝຶກຝົນຫຼໍ່ຫຼອມຄຸນສົມບັດສົມທຳປະຕິວັດ, ຈັນຍາທຳຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ; ຮ່ຳຮຽນ, ຝຶກແອບວິຊາສະເພາະໃຫ້ຊຳນານ ແລະ ເຄົາລົບ ນັບຖືຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງປະຊາຊົນລາວບັນດາເຜົ່າ;

5. ກຽມພ້ອມປະຕິບັດໜ້າທີ່ ແລະ ສູ້ຮົບ, ຍອມເສຍສະລະຊີວິດ ເພື່ອປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ;

6. ເຄົາລົບການຈັດຕັ້ງ, ປະຕິບັດມະຕິຄຳສັ່ງຂອງຜູ້ບັງຄັບບັນຊາ, ລະບຽບວິໄນຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຢ່າງເຂັ້ມງວດ ແລະ ເດັດຂາດ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 7 (ປັບປຸງ) ພັນທະຂອງສັງຄົມ**

ການປ້ອງກັນຄວາມສະຫງົບ ແມ່ນ ຄວາມຮັບຜິດຊອບຂອງທົ່ວປວງຊົນ; ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະປົກປັກຮັກສາຄວາມສະຫງົບທາງດ້ານ ການເມືອງ, ເສດຖະກິດ ແລະ ສັງຄົມ ດ້ວຍການ ສະກັດກັ້ນ, ແຈ້ງ, ລາຍງານ, ສະໜອງຂໍ້ມູນ, ເຂົ້າຮ່ວມ ແລະ ຊ່ວຍເຫຼືອ ປະກອບພາຫະນະ, ວັດຖຸ, ຊັບສິນ ແລະ ອື່ນໆທີ່ຈຳເປັນ ຕາມຄວາມສາມາດຕົວຈິງ ເຂົ້າໃນວຽກງານປ້ອງກັນຄວາມສະຫງົບ.

**ມາດຕາ 8 (ໃໝ່) ການປົກປ້ອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຖືກກ່າວຫາ, ຮ້ອງຟ້ອງ, ໃສ່ຮ້າຍປ້າຍສີ, ຂົ່ມຂູ່ ຫຼື ນາບຂູ່ ໃນເວລາເຄື່ອນໄຫວປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 9 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານປ້ອງກັນຄວາມສະຫງົບ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 10 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ, ການບຳລຸງສ້າງ, ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ ໃຫ້ກຳລັງປ້ອງກັນຄວາມສະຫງົບປະຊາຊົນ, ແກ້ໄຂບັນຫາທີ່ພົວພັນເຖິງວຽກງານປ້ອງກັນຄວາມສະຫງົບ ບົນພື້ນຖານຫຼັກການເຄົາລົບເອກະລາດ, ອຳນາດອະທິປະໄຕ, ພືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງກິດຈະການພາຍໃນຊຶ່ງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ລັດ ສົ່ງເສີມການພົວພັນຮ່ວມມືຮອບດ້ານ ກັບປະເທດເພື່ອນມິດຍຸດທະສາດ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ.

# ພາກທີ II
# ການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

## ໝວດທີ 1
## ທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່

**ມາດຕາ 11 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງກຳລັງປ້ອງກັນຄວາມສະຫງົບອາຊີບ**

ກຳລັງປ້ອງກັນຄວາມສະຫງົບອາຊີບ ແມ່ນ ກຳລັງປະກອບອາວຸດທີ່ມີຫຼາຍເຫຼົ່າວິຊາສະເພາະ ໄດ້ຮັບການບຳລຸງສ້າງວິຊາສະເພາະຢ່າງເປັນລະບົບ, ສັງກັດຢູ່ໃນກົງຈັກການຈັດຕັ້ງຂອງກຳລັງປ້ອງກັນຄວາມສະຫງົບ, ປະກອບດ້ວຍ ນາຍ ແລະ ພົນຕຳຫຼວດ, ໄດ້ຮັບການປະກອບອາວຸດ, ເຕັກນິກວິຊາສະເພາະຢ່າງຄົບຖ້ວນ.

ກຳລັງປ້ອງກັນຄວາມສະຫງົບອາຊີບ ມີພາລະບົດບາດປົກປັກຮັກສາ ລະບອບປະຊາທິປະໄຕປະຊາຊົນ, ຄວາມສະຫງົບທາງດ້ານ ການເມືອງ, ເສດຖະກິດ ແລະ ສັງຄົມ, ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ.

**ມາດຕາ 12 (ປັບປຸງ) ຂອບເຂດສິດຂອງກຳລັງປ້ອງກັນຄວາມສະຫງົບອາຊີບ**

ກຳລັງປ້ອງກັນຄວາມສະຫງົບອາຊີບ ມີຂອບເຂດສິດ ດັ່ງນີ້:

1. ກວດກາການ ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຊອກຮູ້, ເກັບກຳ, ຄົ້ນຄວ້າ, ວິໄຈ, ນຳໃຊ້ຂໍ້ມູນ ຂ່າວສານ ທີ່ກ່ຽວພັນກັບວຽກງານປ້ອງກັນຄວາມສະຫງົບທາງດ້ານ ການເມືອງ, ເສດຖະກິດ ແລະ ສັງຄົມ;

3. ສືບສວນ-ສອບສວນຄະດີອາຍາ, ນຳໃຊ້ວິທີການສືບສວນ-ສອບສວນ, ມາດຕະການສະກັດກັ້ນ ເຊັ່ນ ການກັກຕົວ, ການຈັບຕົວ, ການປ່ອຍຕົວ, ການກວດຄົ້ນ, ການຍຶດຊັບ ແລະ ປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

4. ນຳໃຊ້ວິທີການມະຫາຊົນ, ວິທີການຄຸ້ມຄອງບໍລິຫານ, ວິທີການວິຊາສະເພາະ, ວິທີການເຕັກນິກ-ເຕັກໂນໂລຊີ ແລະ ວິທີການປະກອບອາວຸດ ເຂົ້າໃນການຮັກສາຄວາມສະຫງົບທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ;

5. ເຂົ້າຮ່ວມທຸກການເຄື່ອນໄຫວທາງດ້ານ ການເມືອງ, ເສດຖະກິດ, ສັງຄົມ ແລະ ການຕ່າງປະເທດ ຕາມລະບຽບການ;

6. ທວງໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ທີ່ພົວພັນເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງປະເທດຊາດ;

7. ອອກຄຳສັ່ງໂຈະ ຫຼື ໃຫ້ຢຸດເຊົາຊົ່ວຄາວ ການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ແຕະຕ້ອງເຖິງຄວາມສະຫງົບທາງດ້ານ ການເມືອງ, ເສດຖະກິດ ແລະ ສັງຄົມ ໃນກໍລະນີຈຳເປັນຮີບດ່ວນແລ້ວນຳສະເໜີຂັ້ນເທິງ ໃຫ້ທິດຊີ້ນຳ;

8. ປະກອບ ແລະ ນຳໃຊ້ ອາວຸດ ຍຸດໂທປະກອນ, ທາດແຕກ, ວັດຖຸລະເບີດ, ຍານພາຫະນະທາງບົກ, ທາງນ້ຳ, ທາງອາກາດ, ສັດວິຊາສະເພາະ, ເຄື່ອງມື, ອຸປະກອນເຕັກນິກວິຊາສະເພາະ ຕາມກົດໝາຍ ແລະ ລະບຽບການ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນ;

9. ຈັດຕັ້ງ, ວາງກຳລັງຢູ່ໃນພື້ນທີ່, ຂົງເຂດ, ຂະແໜງການ ທີ່ເຫັນວ່າຈຳເປັນ;

10. ຕິດຕາມ ແລະ ກວດກາ ຄົ້ນຄວາມຖີ່, ທຸລະກຳທາງເອເລັກໂຕຣນິກ, ການຄຸ້ມຄອງຂໍ້ມູນ ຂ່າວສານ ແລະ ລະບົບຄອມພິວເຕີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

11. ຮ່ຳຮຽນ, ຍົກລະດັບ, ຮັບຕຳແໜ່ງໜ້າທີ່, ປະດັບຊັ້ນ, ເລື່ອນຊັ້ນ, ຮັບນະໂຍບາຍຕ່າງໆ ຕາມກົດໝາຍ ແລະ ລະບຽບການ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;

12. ຄົ້ນຄວ້າວິທະຍາສາດ, ຜະລິດ ແລະ ດຳເນີນທຸລະກິດ ທີ່ຖືກຕ້ອງຕາມກົດໝາຍ;

13. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 13 (ປັບປຸງ) ໜ້າທີ່ຂອງກຳລັງປ້ອງກັນຄວາມສະຫງົບອາຊີບ**

ກຳລັງປ້ອງກັນຄວາມສະຫງົບອາຊີບ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນ ແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;

2. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ;

3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

4. ກໍ່ສ້າງຮາກຖານການເມືອງ, ປຸກລະດົມຂົນຂວາຍປະຊາຊົນ, ສ້າງທ່າສະໜາມປ້ອງກັນຄວາມສະຫງົບ ໃນຂອບເຂດທົ່ວປະເທດ, ເຂົ້າຮ່ວມການພັດທະນາເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຊ່ວຍເຫຼືອປະຊາຊົນລາວບັນດາເຜົ່າ;

5. ປ້ອງກັນ ຜູ້ນຳ ພັກ, ລັດຂັ້ນຕ່າງໆ, ແຂກຕ່າງປະເທດ, ທີ່ຕັ້ງກິດຈະການ, ກອງປະຊຸມ, ງານສຳຄັນຕ່າງໆ, ບັນດາການຈັດຕັ້ງພາຍໃນ ແລະ ຕ່າງປະເທດປະຈຳຢູ່ ສປປ ລາວ, ຊີວິດ, ຊັບສິນ, ຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຮັບປະກັນຄວາມໝັ້ນຄົງຂອງຊາດ;

6. ປັບປຸງ, ສ້າງກຳລັງໃຫ້ໜັກແໜ້ນທາງດ້ານການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ, ມີລະບຽບວິໄນເຂັ້ມງວດ, ມີແບບແຜນທັນສະໄໝ, ວິທະຍາສາດ, ເຕັກໂນໂລຊີທີ່ກ້າວໜ້າ ເພື່ອເຮັດສຳເລັດໜ້າທີ່ຂອງຕົນ;

7. ປ້ອງກັນ, ສະກັດກັ້ນ, ຕ້ານທຸກກົນອຸບາຍເລ່ຫຼ່ຽມ ທີ່ຫວັງທຳລາຍມ້າງເພ, ແບ່ງແຍກ, ສ້າງຄວາມປັ່ນປ່ວນ ກໍ່ຄວາມບໍ່ສະຫງົບໃນດິນແດນຂອງ ສປປ ລາວ;

8. ດຳເນີນວຽກງານສືບຂ່າວ;

9. ຕ້ານ ແລະ ສະກັດກັ້ນອາຊະຍາກຳ; ກວດກາ, ຄວບຄຸມ, ອຳນວຍຄວາມສະດວກໃຫ້ແກ່ການຈະລາຈອນ ທາງບົກ, ທາງນ້ຳ ແລະ ທາງລົດໄຟ; ຕ້ານ ແລະ ສະກັດກັ້ນອັກຄີໄພ ແລະ ໄພພິບັດ;

10. ຕ້ານ ອາຊະຍາກຳຂ້າມຊາດ, ການກໍ່ການຮ້າຍ, ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

11. ອຳນວຍຄວາມສະດວກ, ຄວບຄຸມ, ຕິດຕາມ ແລະ ກວດກາການເຂົ້າ-ອອກ ສປປ ລາວ, ຄຸ້ມຄອງຄົນຕ່າງປະເທດ ແລະ ນັກທ່ອງທ່ຽວ;

12. ຄຸ້ມຄອງ ຜູ້ຖືກຫາ, ນັກໂທດ ແລະ ຜູ້ຖືກດັດສ້າງ;

13. ຄຸ້ມຄອງສຳມະໂນຄົວ, ບັດປະຈຳຕົວ, ອາວຸດ, ທາດແຕກ, ວັດຖຸລະເບີດ, ຕາປະທັບ ແລະ ອາຊີບພິເສດ;

14. ກຽມພ້ອມສູ້ຮົບ, ສູ້ຮົບພິລະອາດຫານ, ຍອມເສຍສະລະຊີວິດ ເພື່ອປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ, ຖືເອົາຜົນປະໂຫຍດສ່ວນລວມສູງກວ່າຜົນປະໂຫຍດສ່ວນຕົວ;

15. ຮັກສາຄວາມລັບຂອງປະເທດຊາດ ແລະ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

16. ເກັບກຳ, ຄົ້ນຄວ້າ, ຕີລາຄາ, ຄາດຄະເນສະພາບການ ເພື່ອນຳສະເໜີຕໍ່ຂັ້ນເທິງ ແລ້ວວາງທິດທາງຈັດຕັ້ງປະຕິບັດ;

17. ຄົ້ນຄວ້າວິທະຍາສາດ, ສະຫຼຸບ ຖອດຖອນບົດຮຽນ, ສັງລວມພຶດຕິກຳກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

18. ຄຸ້ມຄອງຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈຂອງ ນາຍ ແລະ ພົນຕຳຫຼວດ ບົນພື້ນຖານຍົກສູງຈິດໃຈເພິ່ງຕົນເອງກຸ້ມຕົນເອງ ແລະ ອອກແຮງສ້າງພະລາທິການກັບທີ່ ຕິດພັນກັບວຽກງານວິຊາສະເພາະ;

19. ປະສານສົມທົບຢ່າງກົມກຽວ ລະຫວ່າງຍຸດທະສາດປ້ອງກັນຄວາມສະຫງົບແຫ່ງຊາດ ກັບການພັດທະນາເສດຖະກິດ-ສັງຄົມ; ຮ່ວມມື ແລະ ປະສານສົມທົບກັບບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

20. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 14 (ປັບປຸງ) ຄວາມຮັບຜິດຊອບຂອງນາຍ ແລະ ພົນຕຳຫຼວດ**

ນາຍ ແລະ ພົນຕຳຫຼວດ ຮັບຜິດຊອບ ດັ່ງນີ້:

1. ນາຍຕຳຫຼວດ ຮັບຜິດຊອບຊີ້ນຳ, ນຳພາ, ບັນຊາ, ຄຸ້ມຄອງກົມກອງ, ເຫຼົ່າວິຊາສະເພາະ ທັງຈັດຕັ້ງປະຕິບັດວຽກງານຕົວຈິງ;

2. ພົນຕຳຫຼວດ ຮັບຜິດຊອບໃນການຈັດຕັ້ງປະຕິບັດ ຕາມການຊີ້ນຳ, ນຳພາ, ບັນຊາຂອງຂັ້ນເທິງຢ່າງເຂັ້ມງວດ;

3. ນາຍ ແລະ ພົນຕຳຫຼວດ ຮັບຜິດຊອບຕໍ່ຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງຂອງຕົນໃນການປະຕິບັດໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ.

**ມາດຕາ 15 (ປັບປຸງ) ທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ**

ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ ແມ່ນ ກຳລັງປ້ອງກັນຄວາມສະຫງົບບ້ານ, ກຳລັງປ້ອງກັນພາຍໃນ, ກຳລັງປ້ອງກັນຕົວ ແລະ ກຳລັງຮັກສາຄວາມປອດໄພ ທີ່ເຮັດວຽກງານປ້ອງກັນຄວາມສະຫງົບຢູ່ຮາກຖານບ້ານ, ສຳນັກງານ, ອົງການ, ຫົວໜ່ວຍທຸລະກິດຕ່າງໆ ຊຶ່ງບໍ່ໄດ້ຮັບການປະດັບຊັ້ນຄືກັນກັບກຳລັງອາຊີບ.

ທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ຂອງກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ.

## ໝວດທີ 2
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

**ມາດຕາ 16 (ປັບປຸງ) ໂຄງປະກອບການຈັດຕັ້ງ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ກະຊວງປ້ອງກັນຄວາມສະຫງົບ;
2. ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;
3. ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ;
4. ປ້ອງກັນຄວາມສະຫງົບບ້ານ.

ສຳລັບການຈັດຕັ້ງລະອຽດ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 17 (ປັບປຸງ) ໂຄງປະກອບບຸກຄະລາກອນນຳພາ, ບັນຊາ ແຕ່ລະຂັ້ນ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີໂຄງປະກອບບຸກຄະລາກອນນຳພາ, ບັນຊາ ແຕ່ລະຂັ້ນ ດັ່ງນີ້:

1. ກະຊວງປ້ອງກັນຄວາມສະຫງົບ ມີ ລັດຖະມົນຕີ ແລະ ຮອງລັດຖະມົນຕີ;

2. ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ມີ ຫົວໜ້າ ແລະ ຮອງຫົວໜ້າ;

3. ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ ມີ ຫົວໜ້າ ແລະ ຮອງຫົວໜ້າ;

4. ປ້ອງກັນຄວາມສະຫງົບບ້ານ ມີ ຫົວໜ້າ ແລະ ຮອງຫົວໜ້າ.

**ມາດຕາ 18 (ປັບປຸງ) ສິດ ແລະ ໜ້າທີ່ ຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ**

ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ນຳພາ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

2. ບັນຊາ, ຄຸ້ມຄອງ ແລະ ກວດກາ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

3. ສະເໜີ ສ້າງ ຫຼື ປັບປຸງ ກົດໝາຍ, ລັດຖະບັນຍັດ ແລະ ດຳລັດ ກ່ຽວກັບວຽກງານໃນຂະແໜງການຂອງຕົນ ຕໍ່ລັດຖະບານ;

4. ຊີ້ນຳການຄົ້ນຄວ້າວິທະຍາສາດ, ການເຜີຍແຜ່ ແລະ ແນະນຳກ່ຽວກັບການນຳໃຊ້ວິທະຍາສາດໃໝ່ ເຂົ້າໃນການພັດທະນາວຽກງານປ້ອງກັນຄວາມສະຫງົບ;

5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໃນຂະແໜງການຂອງຕົນ ໃຫ້ມີປະສິດທິພາບ;

6. ໂຈະການປະຕິບັດ, ລົບລ້າງ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫຼື ແຈ້ງການ ທີ່ຂັດກັບກົດໝາຍ ຫຼື ລະບຽບການ ຂອງການຈັດຕັ້ງຂັ້ນລຸ່ມ ທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ;

7. ສະເໜີນາຍົກລັດຖະມົນຕີ ໂຈະການປະຕິບັດ, ປັບປຸງ, ລົບລ້າງ ຫຼື ຍົກເລີກນິຕິກຳຂອງຂະແໜງການອື່ນ ຫຼື ຂອງອົງການປົກຄອງທ້ອງຖິ່ນ ທີ່ຂັດກັບນິຕິກຳຂອງກະຊວງຕົນ ຫຼື ກໍ່ຄວາມເສຍຫາຍໃຫ້ແກ່ຄວາມສະຫງົບຂອງປະເທດຊາດ;

8. ປະສານສົມທົບກັບ ຂະແໜງການຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນ ໃນການປະຕິບັດວຽກງານປ້ອງກັນຄວາມສະຫງົບ;

9. ພົວພັນ, ຮ່ວມມືກັບຕ່າງປະເທດ, ເຊັນສັນຍາສາກົນ ຕາມການມອບໝາຍຂອງລັດຖະບານ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 19 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ**

ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍລັດຖະມົນຕີ ໃນການຊີ້ນຳ, ນຳພາ, ບັນຊາ, ກວດກາວຽກງານລວມຂອງກະຊວງປ້ອງກັນຄວາມສະຫງົບ;

2. ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີ;

3. ໃນກໍລະນີທີ່ລັດຖະມົນຕີບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນແມ່ນຮອງລັດຖະມົນຕີ ຜູ້ທີ່ໄດ້ຮັບມອບໝາຍເປັນຜູ້ຮັກສາການແທນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 20 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າ ແລະ ຮອງຫົວໜ້າການຈັດຕັ້ງຂັ້ນຕ່າງໆ**

ສິດ ແລະ ໜ້າທີ່ ຂອງຫົວໜ້າ ແລະ ຮອງຫົວໜ້າ ກົມກອງອ້ອມຂ້າງກະຊວງ, ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ III
## ເຫຼົ່າວິຊາສະເພາະ, ທີ່ມາ, ມາດຕະຖານ, ການກໍ່ສ້າງ ແລະ ອາຍຸກະສຽນ

**ມາດຕາ 21 (ປັບປຸງ) ເຫຼົ່າວິຊາສະເພາະຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ເຫຼົ່າວິຊາສະເພາະຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີ ດັ່ງນີ້:

1. ເຫຼົ່າວິຊາສະເພາະສັນຕິບານ ແມ່ນ ກຳລັງທີ່ເຮັດໜ້າທີ່ປ້ອງກັນ, ສະກັດກັ້ນ ແລະ ຕ້ານອາຊະຍາກຳທາງດ້ານການເມືອງ ແລະ ດຳເນີນຄະດີ; ອຳນວຍຄວາມສະດວກ, ຄວບຄຸມ, ຕິດຕາມ ແລະ ກວດກາການເຂົ້າ-ອອກ ສປປ ລາວ, ຄຸ້ມຄອງຄົນຕ່າງປະເທດ ແລະ ນັກທ່ອງທ່ຽວ ເພື່ອຮັບປະກັນຄວາມສະຫງົບທາງດ້ານການເມືອງ ແລະ ຄວາມໝັ້ນຄົງຂອງຊາດ;

2. ເຫຼົ່າວິຊາສະເພາະຕຳຫຼວດ ແມ່ນ ກຳລັງທີ່ເຮັດໜ້າທີ່ປ້ອງກັນ, ສະກັດກັ້ນ, ຕ້ານອາຊະຍາກຳທາງດ້ານເສດຖະກິດ-ສັງຄົມ ແລະ ດຳເນີນຄະດີອາຍາ, ກວດກາ, ຄວບຄຸມ ແລະ ອຳນວຍຄວາມສະດວກການຈະລາຈອນ ທາງບົກ, ທາງນ້ຳ ແລະ ທາງລົດໄຟ, ສະກັດກັ້ນ ແລະ ຕ້ານອັກຄີໄພ, ໄພພິບັດ ເພື່ອເຮັດໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພ;

3. ເຫຼົ່າວິຊາສະເພາະການເມືອງ ແມ່ນ ກຳລັງທີ່ເຮັດໜ້າທີ່ວຽກງານການເມືອງແນວຄິດ, ການຈັດຕັ້ງ, ນະໂຍບາຍ, ການກໍ່ສ້າງ, ການກວດກາ, ການປ້ອງກັນກຳລັງ; ໂຄສະນາ, ຂະບວນການກິລາ-ສິລະປະ ແລະ ວຽກງານອົງການຈັດຕັ້ງມະຫາຊົນ;

4. ເຫຼົ່າວິຊາສະເພາະເສນາທິການ ແມ່ນ ກໍາລັງທີ່ເຮັດໜ້າທີ່ຄົ້ນຄວ້າວາງແຜນຍຸດທະສາດ, ວິທະຍາສາດ, ພົວພັນຕ່າງປະເທດ, ຄຸ້ມຄອງເອກະສານ, ສື່ສານ, ກົດລັບ, ກົດໝາຍ, ກວດກາປະເມີນຜົນການປະຕິບັດກົດໝາຍ ແລະ ນິຕິກໍາອື່ນ ໃນກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ແລະ ເຮັດໜ້າທີ່ວຽກງານບໍລິຫານ;

5. ເຫຼົ່າວິຊາສະເພາະພະລາທິການ ແມ່ນ ກໍາລັງທີ່ເຮັດໜ້າທີ່ຮັບປະກັນທາງດ້ານພະລາທິການ ແລະ ການລ້ຽງດູກໍາລັງ;

6. ເຫຼົ່າວິຊາສະເພາະສືບຂ່າວຍຸດທະສາດ ແມ່ນ ກໍາລັງທີ່ເຮັດໜ້າທີ່ ຊອກຮູ້, ເກັບກໍາສະພາບການກ່ຽວກັບກົນອຸບາຍ, ເລ່ຫຼ່ຽມ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຸ່ມຄົນບໍ່ດີ ທີ່ຫວັງທໍາລາຍຄວາມສະຫງົບທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ;

7. ເຫຼົ່າວິຊາສະເພາະຄຸມຂັງ, ດັດສ້າງ ແມ່ນ ກໍາລັງທີ່ເຮັດໜ້າທີ່ຄຸ້ມຄອງ, ສຶກສາອົບຮົມ, ຝຶກວິຊາຊີບ ໃຫ້ນັກໂທດ ແລະ ຜູ້ຖືກດັດສ້າງ;

8. ເຫຼົ່າວິຊາສະເພາະຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ ແມ່ນ ກໍາລັງທີ່ເຮັດໜ້າທີ່ກໍ່ສ້າງຮາກຖານການເມືອງ, ຄຸ້ມຄອງສໍາມະໂນຄົວ, ບັດປະຈໍາຕົວ, ອາວຸດ, ທາດແຕກ, ຕາປະທັບ ແລະ ອາຊີບພິເສດ;

9. ເຫຼົ່າວິຊາສະເພາະປ້ອງກັນເຄື່ອນທີ່ ແມ່ນ ກໍາລັງທີ່ເຮັດໜ້າທີ່ເຄື່ອນໄຫວກວດກາລາດຕະເວນ, ປ້ອງກັນງານສໍາຄັນ, ແກ້ໄຂການຈະລາຈົນ ແລະ ການກໍ່ຄວາມບໍ່ສະຫງົບໃນສັງຄົມ;

10. ເຫຼົ່າວິຊາສະເພາະປ້ອງກັນທີ່ຕັ້ງ ແມ່ນ ກໍາລັງທີ່ເຮັດໜ້າທີ່ປ້ອງກັນສະຖານທີ່ສໍາຄັນຂອງພັກ, ລັດ, ອົງການຈັດຕັ້ງສາກົນ ແລະ ສະຖານທີ່ສໍາຄັນ ທາງດ້ານເສດຖະກິດ, ວັດທະນະທໍາ ແລະ ສັງຄົມ;

11. ເຫຼົ່າວິຊາສະເພາະປ້ອງກັນສູນກາງ ແມ່ນ ກໍາລັງທີ່ເຮັດໜ້າທີ່ປ້ອງກັນການນໍາພັກ, ລັດ, ແຂກການນໍາຂັ້ນສູງຂອງພັກ ແລະ ລັດ;

12. ກໍາລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ ແມ່ນ ກໍາລັງທີ່ເຮັດວຽກງານປ້ອງກັນຄວາມສະຫງົບປະຈໍາທີ່ ຢູ່ຮາກຖານບ້ານ, ສໍານັກງານ, ອົງການ, ຫົວໜ່ວຍທຸລະກິດ ແລະ ອື່ນໆ.

### ມາດຕາ 22 (ປັບປຸງ) ທີ່ມາຂອງກໍາລັງປ້ອງກັນຄວາມສະຫງົບປະຊາຊົນ

ກໍາລັງປ້ອງກັນຄວາມສະຫງົບອາຊີບ ມີທີ່ມາ ດັ່ງນີ້:

1. ພົນລະເມືອງລາວບັນດາເຜົ່າ ທີ່ໄດ້ສະໝັກ, ຄັດເລືອກ, ກວດກາ ແລະ ສອບເສັງ ເຂົ້າເປັນກໍາລັງປ້ອງກັນຄວາມສະຫງົບປະຊາຊົນ;

2. ນັກຮຽນ ຫຼື ນັກສຶກສາ ທີ່ໄດ້ຮຽນຈົບວິຊາຊີບໃດໜຶ່ງ ໂດຍມີເງື່ອນໄຂຄົບຖ້ວນ;

3. ພະນັກງານ-ລັດຖະກອນ ທີ່ໄດ້ຮັບການຄັດເລືອກມາຈາກອົງການຈັດຕັ້ງຂອງພັກ ແລະ ລັດ;

4. ກໍາລັງເຄິ່ງອາຊີບ ແລະ ພາກສ່ວນເອກະຊົນ ທີ່ໄດ້ຮັບການຄັດເລືອກ.

ສໍາລັບທີ່ມາຂອງກໍາລັງປ້ອງກັນຄວາມສະຫງົບເຄິ່ງອາຊີບໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 23 (ປັບປຸງ) ມາດຕະຖານຂອງນາຍ ແລະ ພົນຕຳຫຼວດ

ນາຍ ແລະ ພົນຕຳຫຼວດ ມີມາດຕະຖານ ດັ່ງນີ້:

1. ຕ້ອງເປັນຄົນເຊື້ອຊາດ ແລະ ສັນຊາດ ລາວ ທີ່ມີອາຍຸແຕ່ສິບແປດປີ ຂຶ້ນໄປ;

2. ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີ ຕໍ່ພັກ, ລັດ ແລະ ປະຊາຊົນ, ມີອຸດົມການສັງຄົມນິຍົມ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຫຼັກໝັ້ນຈຳແນກໄດ້ມິດ ແລະ ສັດຕູ, ມີຄຸນສົມບັດສົມທຳປະຕິວັດ, ມີນ້ຳໃຈກ້າຫານເສຍສະລະ, ມີສະຕິຕໍ່ການຈັດຕັ້ງ, ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ຢ່າງເຂັ້ມງວດ;

3. ມີຊີວະປະຫວັດຈະແຈ້ງ;

4. ມີປະກາສະນີຍະບັດ ຈົບຊັ້ນມັດທະຍົມສຶກສາຕອນປາຍ ຫຼື ວິຊາຊີບໃດໜຶ່ງ, ສຳລັບຜູ້ທີ່ຢູ່ຊົນນະບົດຫ່າງໄກສອກຫຼີກ ຊຶ່ງບໍ່ມີປະກາສະນີຍະບັດ ຈົບຊັ້ນມັດທະຍົມສຶກສາຕອນປາຍ ກໍຈະໄດ້ຮັບການພິຈາລະນາ ຕາມຄວາມເໝາະສົມ;

5. ມີຄວາມຮູ້ພື້ນຖານດ້ານແນວທາງ, ນະໂຍບາຍຂອງພັກ ແລະ ວິຊາສະເພາະໃດໜຶ່ງທີ່ແນ່ນອນ;

6. ມີສຸຂະພາບແຂງແຮງ, ຮ່າງກາຍສົມບູນ.

ສຳລັບນາຍຕຳຫຼວດ ຕ້ອງມີມາດຕະຖານຕື່ມ ດັ່ງນີ້:

- ຂັ້ນນາຍຮ້ອຍ ຕ້ອງມີປະກາສະນີຍະບັດວິຊາສະເພາະ ຊັ້ນກາງຂຶ້ນໄປ ຫຼື ໄດ້ຜ່ານປະສົບການດ້ານການຊີ້ນຳ, ນຳພາ, ບັນຊາ ແລະ ມີຜົນສຳເລັດໃນວຽກງານຕົວຈິງ;
- ຂັ້ນນາຍພັນ ຕ້ອງມີປະກາສະນີຍະບັດວິຊາສະເພາະ ຊັ້ນສູງ ຫຼື ປະກາສະນີຍະບັດດ້ານທິດສະດີການເມືອງ-ການປົກຄອງຊັ້ນກາງ ຫຼື ທຽບເທົ່າ ຂຶ້ນໄປ ແລະ ໄດ້ຜ່ານປະສົບການດ້ານການຊີ້ນຳ, ນຳພາ, ບັນຊາ ແລະ ມີຜົນສຳເລັດໃນວຽກງານຕົວຈິງ.

ຂັ້ນນາຍຮ້ອຍ ແລະ ຂັ້ນນາຍພັນ ທີ່ກ່າວເທິງນີ້ ຕ້ອງມີຄວາມສາມາດໃນການຊີ້ນຳ, ນຳພາ, ບັນຊາ, ມີຄວາມຕື່ນຕົວທາງການເມືອງສູງ, ມີຄວາມເປັນແບບຢ່າງນຳໜ້າ ແລະ ມີບົດບາດອິດທິພົນຕໍ່ນາຍ ແລະ ພົນຕຳຫຼວດ.

### ມາດຕາ 24 (ປັບປຸງ) ການກໍ່ສ້າງ ແລະ ບຳລຸງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ການກໍ່ສ້າງ ແລະ ບຳລຸງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແມ່ນ ຄວາມຮັບຜິດຊອບຂອງພາກສ່ວນຕ່າງໆ ດັ່ງນີ້:

1. ຄະນະພັກ, ຄະນະບັນຊາຂັ້ນຕ່າງໆ ຂອງກະຊວງປ້ອງກັນຄວາມສະຫງົບ ມີຄວາມຮັບຜິດຊອບກໍ່ສ້າງກຳລັງຂອງຕົນໃຫ້ເຕີບໃຫຍ່, ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ມີແບບແຜນວິທີເຮັດວຽກທີ່ກ້າວໜ້າ ແລະ ທັນສະໄໝ, ມີຄວາມຊຳນານທາງດ້ານວິຊາສະເພາະ;

2. ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງລາວ ມີພັນທະປະກອບສ່ວນກໍ່ສ້າງ, ບໍາລຸງ ແລະ ສຶກສາອົບຮົມກໍາລັງປ້ອງກັນຄວາມສະຫງົບປະຊາຊົນ.

**ມາດຕາ 25 (ປັບປຸງ) ອາຍຸກະສຽນ ຂອງນາຍ ແລະ ພົນຕໍາຫຼວດ**

ອາຍຸກະສຽນ ຂອງນາຍ ແລະ ພົນຕໍາຫຼວດ ມີ ດັ່ງນີ້:

**1. ອາຍຸກະສຽນ ປະຈໍາການ:**

ອາຍຸກະສຽນ ຂອງກໍາລັງປ້ອງກັນຄວາມສະຫງົບອາຊີບ ທີ່ປະຈໍາການ ສູງສຸດ ຫົກສິບປີ. ໃນກໍລະນີພິເສດ ບໍ່ໃຫ້ເກີນ ຫົກສິບຫ້າປີ.

**2. ອາຍຸກະສຽນ ຮັບບໍານານ:**

ອາຍຸກະສຽນ ຮັບບໍານານ ຂອງກໍາລັງປ້ອງກັນຄວາມສະຫງົບອາຊີບ ເພດຊາຍ ແລະ ເພດຍິງ ແມ່ນ ຫົກສິບປີ, ໃນກໍລະນີພິເສດທີ່ມີຄວາມຮຽກຮ້ອງຕ້ອງການບໍ່ໃຫ້ເກີນ ຫົກສິບຫ້າປີ, ອາຍຸການເຮັດວຽກຊາວຫ້າປີ ຂຶ້ນໄປ. ສໍາລັບເພດຍິງ ຈະອອກຮັບອຸດໜູນບໍານານ ກ່ອນກໍໄດ້ ແຕ່ອາຍຸກະສຽນບໍ່ໃຫ້ຫຼຸດຫ້າສິບຫ້າປີ.

ສໍາລັບຜູ້ທີ່ເຮັດວຽກກັບທາດເບື່ອ, ທາດເຄມີ ຫຼື ເຮັດວຽກ ຢູ່ເຂດຫຍຸ້ງຍາກທຸລະກັນດານເປັນເວລາ ຫ້າປີ ຢ່າງຕໍ່ເນື່ອງຂຶ້ນໄປ ມີສິດໄດ້ຮັບບໍານານກ່ອນກໍານົດ ແລະ ຕ້ອງມີອາຍຸ ຫ້າສິບຫ້າປີ ສໍາລັບເພດຊາຍ; ຫ້າສິບປີ ສໍາລັບ ເພດຍິງ ແລະ ມີອາຍຸການ ຊາວປີ ຂຶ້ນໄປ ໂດຍໄດ້ຮັບອຸດໜູນບໍານານຄືກັນກັບເງື່ອນໄຂການຮັບອຸດໜູນບໍານານທົ່ວໄປ.

ນາຍຕໍາຫຼວດ ເມື່ອເຖິງກະສຽນບໍານານ ແລະ ຄົບປີການແລ້ວ ຕ້ອງໄດ້ຮັບອຸດໜູນບໍານານ ໂດຍບໍ່ຈໍາເປັນຕ້ອງຂຽນຄໍາຮ້ອງ ຊຶ່ງການຈັດຕັ້ງບ່ອນຜູ້ກ່ຽວສັງກັດເປັນຜູ້ແຈ້ງໃຫ້ຮູ້ກ່ອນລ່ວງໜ້າໜຶ່ງປີ.

## ພາກທີ IV
## ລະບົບຂັ້ນ, ຊັ້ນ ແລະ ຕໍາແໜ່ງ
### ໝວດທີ 1
### ຂັ້ນ ແລະ ຊັ້ນ ຂອງນາຍ ແລະ ພົນຕໍາຫຼວດ

**ມາດຕາ 26 ຂັ້ນ ແລະ ຊັ້ນ ຂອງນາຍ ແລະ ພົນຕໍາຫຼວດ**

ນາຍ ແລະ ພົນຕໍາຫຼວດ ປະກອບມີ ຫ້າຂັ້ນ ແລະ ສິບຫົກຊັ້ນ ດັ່ງນີ້:

**1. ຂັ້ນນັກຮົບ ມີ ສອງຊັ້ນ ຄື:**

- ຊັ້ນ ສອງ;
- ຊັ້ນ ໜຶ່ງ.

**2. ຊັ້ນນາຍສິບ ມີ ສີ່ຊັ້ນ ຄື:**

- ຊັ້ນ ສິບຕີ;
- ຊັ້ນ ສິບໂທ;
- ຊັ້ນ ສິບເອກ;
- ຊັ້ນ ວາທີຮ້ອຍຕີ.

**3. ຊັ້ນນາຍຮ້ອຍ ມີ ສາມຊັ້ນ ຄື:**

- ຊັ້ນ ຮ້ອຍຕີ;
- ຊັ້ນ ຮ້ອຍໂທ;
- ຊັ້ນ ຮ້ອຍເອກ.

**4. ຊັ້ນນາຍພັນ ມີ ສາມຊັ້ນ ຄື:**

- ຊັ້ນ ພັນຕີ;
- ຊັ້ນ ພັນໂທ;
- ຊັ້ນ ພັນເອກ.

**5. ຊັ້ນນາຍພົນ ມີ ສີ່ຊັ້ນ ຄື:**

- ຊັ້ນ ພົນຈັດຕະວາ;
- ຊັ້ນ ພົນຕີ;
- ຊັ້ນ ພົນໂທ;
- ຊັ້ນ ພົນເອກ.

**ມາດຕາ 27 (ປັບປຸງ) ການປະດັບຊັ້ນໃຫ້ນາຍ ແລະ ພົນຕຳຫຼວດ**

ການປະດັບຊັ້ນໃຫ້ ນາຍ ແລະ ພົນຕຳຫຼວດ ໃຫ້ປະຕິບັດ ດັ່ງນີ້:

1. ນາຍ ແລະ ພົນຕຳຫຼວດ ທີ່ຈົບມາຈາກໂຮງຮຽນວິຊາສະເພາະ ປ້ອງກັນຄວາມສະຫງົບ ທັງພາຍໃນ ແລະ ຕ່າງປະເທດ ຈະໄດ້ຮັບການປະດັບຊັ້ນ ຄື:

- ສິບໂທ ສຳລັບ ພົນຕຳຫຼວດທີ່ຈົບໂຮງຮຽນນາຍສິບ;
- ຮ້ອຍຕີ ສຳລັບ ພົນຕຳຫຼວດ ທີ່ຈົບຈາກໂຮງຮຽນນາຍຕຳຫຼວດຊັ້ນກາງ ແລະ ຊັ້ນສູງ;
- ຮ້ອຍໂທ ສຳລັບ ພົນຕຳຫຼວດ ທີ່ຈົບຈາກສະຖາບັນນາຍຕຳຫຼວດຊັ້ນປະລິນຍາຕີ;
- ຮ້ອຍເອກ ສຳລັບ ນາຍຕຳຫຼວດ ທີ່ຈົບຊັ້ນປະລິນຍາໂທ;
- ພັນຕີ ສຳລັບ ນາຍຕຳຫຼວດ ທີ່ຈົບຊັ້ນປະລິນຍາເອກ.

ນາຍຕຳຫຼວດ ທີ່ໄປຮຽນວິຊາສະເພາະ ຊັ້ນກາງ, ຊັ້ນສູງ ແລະ ປະລິນຍາຕີ ໄດ້ຮັບການເລື່ອນຊັ້ນຕາມອາຍຸການ ການເລື່ອນຊັ້ນ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

2. ນັກຮຽນທີ່ຈົບການສຶກສາສາຍສາມັນ ແລະ ຈົບຈາກໂຮງຮຽນຂະແໜງການອື່ນ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືກຄັດເລືອກເຂົ້າໃນກຳລັງປ້ອງກັນຄວາມສະຫງົບ ຈະໄດ້ຮັບການປະດັບຊັ້ນ ຄື:

- ຊັ້ນສອງ ສຳລັບຜູ້ຈົບມັດທະຍົມຕອນປາຍ;
- ສິບຕີ ສຳລັບຜູ້ຈົບຊັ້ນຕົ້ນ;
- ສິບເອກ ສຳລັບຜູ້ຈົບຊັ້ນກາງ;
- ວາທີຮ້ອຍຕີ ສຳລັບຜູ້ຈົບຊັ້ນສູງ;
- ຮ້ອຍຕີ ສຳລັບຜູ້ຈົບປະລິນຍາຕີ;
- ຮ້ອຍໂທ ສຳລັບຜູ້ຈົບປະລິນຍາໂທ;
- ຮ້ອຍເອກ ສຳລັບຜູ້ຈົບປະລິນຍາເອກ.

ແຕ່ພາຍຫຼັງໄດ້ເຂົ້າເປັນກຳລັງປ້ອງກັນຄວາມສະຫງົບແລ້ວ ຕ້ອງໄດ້ຜ່ານການບຳລຸງ ຫຼື ກໍ່ສ້າງວິຊາສະເພາະປ້ອງກັນຄວາມສະຫງົບ ຈົບມາແລ້ວ ຈະໄດ້ຮັບເລື່ອນຊັ້ນ ໃຫ້ເທົ່າກັບນາຍ ແລະ ພົນຕຳຫຼວດ ທີ່ຮຽນຈົບຈາກໂຮງຮຽນວິຊາສະເພາະປ້ອງກັນຄວາມສະຫງົບ ຕາມວຸດທິການສຶກສາທີ່ຈົບມາ, ຖ້າບໍ່ໄດ້ຜ່ານການບຳລຸງ ຫຼື ກໍ່ສ້າງວິຊາສະເພາະປ້ອງກັນຄວາມສະຫງົບ ຈະໄດ້ຮັບການເລື່ອນຊັ້ນຕາມອາຍຸການເລື່ອນຊັ້ນ ຫຼື ຕາມຕຳແໜ່ງ, ໜ້າທີ່ຄວາມຮັບຜິດຊອບຂອງວຽກງານ;

3. ນາຍ ແລະ ພົນຕຳຫຼວດ ທີ່ຖືກຄັດເລືອກ ໄປຮຽນຕາມທຶນແບ່ງປັນຂອງຂະແໜງການອື່ນ ພາຍຫຼັງຮຽນຈົບມາຈະໄດ້ຮັບການປະດັບຊັ້ນ ຄືກັບຮຽນຈົບຢູ່ພາຍໃນໂຮງຮຽນກຳລັງປ້ອງກັນຄວາມສະຫງົບ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້;

4. ນາຍ ແລະ ພົນຕຳຫຼວດ ທີ່ໄດ້ຮັບທຶນ ຫຼື ສະໝັກໃຈ ໄປຮຽນດ້ວຍທຶນຕົນເອງ ຕ້ອງໄດ້ຮັບການຕົກລົງເຫັນດີ ຈາກກະຊວງປ້ອງກັນຄວາມສະຫງົບ ຈຶ່ງຈະໄດ້ຮັບການປະດັບຊັ້ນ ຄືກັບຮຽນຈົບຢູ່ພາຍໃນໂຮງຮຽນກຳລັງປ້ອງກັນຄວາມສະຫງົບ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້;

5. ພະນັກງານ-ລັດຖະກອນ ທີ່ຍົກຍ້າຍມາແຕ່ຝ່າຍພົນລະເຮືອນ ຕາມຄວາມຕ້ອງການຂອງກະຊວງປ້ອງກັນຄວາມສະຫງົບ ຕ້ອງໄດ້ຮັບການປະດັບຊັ້ນຕາມເງື່ອນໄຂ ດັ່ງນີ້:

- ຈົບຊັ້ນກາງ ເປັນພະນັກງານ-ລັດຖະກອນ ສາມປີ ຫາ ເກົ້າປີ ແມ່ນຈະໄດ້ຮັບການປະດັບຫຼຽບຊັ້ນຮ້ອຍຕີ, ເປັນພະນັກງານ-ລັດຖະກອນ ສິບປີ ຂຶ້ນໄປ ແມ່ນຈະໄດ້ຮັບການປະດັບຫຼຽບຊັ້ນຮ້ອຍໂທ;
- ຈົບຊັ້ນສູງ ຫຼື ປະລິນຍາຕີ ເປັນພະນັກງານ-ລັດຖະກອນ ສາມປີ ຫາ ເກົ້າປີ ແມ່ນຈະໄດ້ຮັບການປະດັບຫຼຽບຊັ້ນຮ້ອຍໂທ, ເປັນພະນັກງານ-ລັດຖະກອນ ສິບປີ ຂຶ້ນໄປ ແມ່ນຈະໄດ້ຮັບການປະດັບຫຼຽບຊັ້ນຮ້ອຍເອກ;
- ຈົບປະລິນຍາໂທ ເປັນພະນັກງານ-ລັດຖະກອນ ສາມປີ ຫາ ເກົ້າປີ ແມ່ນຈະໄດ້ຮັບການປະດັບຫຼຽບຊັ້ນຮ້ອຍເອກ, ເປັນພະນັກງານ-ລັດຖະກອນ ສິບປີ ຂຶ້ນໄປ ແມ່ນຈະໄດ້ຮັບການປະດັບຫຼຽບຊັ້ນພັນຕີ;
- ຈົບປະລິນຍາເອກຂຶ້ນໄປ ເປັນພະນັກງານ-ລັດຖະກອນ ສາມປີ ຫາ ເກົ້າປີ ແມ່ນຈະໄດ້ຮັບການປະດັບຫຼຽບຊັ້ນພັນຕີ, ເປັນພະນັກງານ-ລັດຖະກອນ ສິບປີ ຂຶ້ນໄປ ແມ່ນຈະໄດ້ຮັບການປະດັບຫຼຽບຊັ້ນພັນໂທ.

ການຫຼຸບປະດັບຊັ້ນ ຍັງໃຫ້ອີງຕາມຕຳແໜ່ງ ທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້ ຫຼື ອີງຕາມຂັ້ນເງິນເດືອນ ທີ່ຖືກຍົກຍ້າຍມາຈາກຝ່າຍພົນລະເຮືອນ.

## ມາດຕາ 28 (ປັບປຸງ) ກຳນົດເວລາການເລື່ອນຊັ້ນນາຍ ແລະ ພົນຕຳຫຼວດ

ການພິຈາລະນາການເລື່ອນຊັ້ນນາຍ ແລະ ພົນຕຳຫຼວດ ໃຫ້ປະຕິບັດຕາມກຳນົດເວລາ ດັ່ງນີ້:

1). ຊັ້ນ 2 ຂຶ້ນ ຊັ້ນ 1 ກຳນົດ 1 ປີ;
2). ຊັ້ນ 1 ຂຶ້ນ ສິບຕີ; ກຳນົດ 1 ປີ;
3). ຊັ້ນສິບຕີ ຂຶ້ນ ສິບໂທ ກຳນົດ 1 ປີ 6 ເດືອນ;
4). ຊັ້ນສິບໂທ ຂຶ້ນ ສິບເອກ ກຳນົດ 1 ປີ 6 ເດືອນ;
5). ຊັ້ນສິບເອກ ຂຶ້ນ ວາທີຣ້ອຍຕີ ກຳນົດ 2 ປີ;
6). ຊັ້ນວາທີຣ້ອຍຕີ ຂຶ້ນ ຮ້ອຍຕີ ກຳນົດ 3 ປີ;
7. ຊັ້ນຮ້ອຍຕີ ຂຶ້ນ ຮ້ອຍໂທ ກຳນົດ 3 ປີ;
8). ຊັ້ນຮ້ອຍໂທ ຂຶ້ນ ຮ້ອຍເອກ ກຳນົດ 3 ປີ;
9). ຊັ້ນຮ້ອຍເອກ ຂຶ້ນ ພັນຕີ ກຳນົດ 4 ປີ;
10). ຊັ້ນພັນຕີ ຂຶ້ນ ພັນໂທ ກຳນົດ 4 ປີ;
11). ຊັ້ນພັນໂທ ຂຶ້ນ ພັນເອກ ກຳນົດ 4 ປີ.

ສ່ວນການເລື່ອນຊັ້ນພັນເອກຂຶ້ນນາຍພົນ ແລະ ນາຍພົນຂຶ້ນນາຍພົນຕາມລະດັບຊັ້ນນັ້ນ ແມ່ນ ບໍ່ມີກຳນົດເວລາໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ.

ໄລຍະເວລາທີ່ນາຍຕຳຫຼວດຮ່ຳຮຽນ ຫຼື ສຶກສາຢູ່ນັ້ນ ໃຫ້ຄິດໄລ່ໃສ່ກຳນົດເວລາການເລື່ອນຊັ້ນ ຕາມມາດຕານີ້.

ນາຍ ແລະ ພົນຕຳຫຼວດ ທີ່ມີຜົນງານດີເດັ່ນພິເສດໃນການປະຕິບັດໜ້າທີ່ວິຊາສະເພາະ ທີ່ຂັ້ນເທິງມອບໝາຍໃຫ້ ຈະໄດ້ເລື່ອນຂ້າມຊັ້ນ; ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານ, ຄົ້ນຄວ້າວິທະຍາສາດ, ກົດໝາຍ, ການຮ່ຳຮຽນ ກໍຈະໄດ້ຮັບການພິຈາລະນາ ເລື່ອນຊັ້ນກ່ອນກຳນົດ.

ນາຍ ແລະ ພົນຕຳຫຼວດ ທີ່ຖືກຍົກຍ້າຍໄປປະຕິບັດໜ້າທີ່ຢູ່ຝ່າຍພົນລະເຮືອນ ເມື່ອກັບຄືນກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຈະໄດ້ຮັບການພິຈາລະນາກ່ຽວກັບຊັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ແລະ ມາດຕາ 32 ຂອງກົດໝາຍສະບັບນີ້.

## ມາດຕາ 29 (ປັບປຸງ) ເງື່ອນໄຂການເລື່ອນຊັ້ນນາຍ ແລະ ພົນຕຳຫຼວດ

ການເລື່ອນຊັ້ນນາຍ ແລະ ພົນຕຳຫຼວດ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເຖິງກຳນົດເວລາການເລື່ອນຊັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້;
2. ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະ ຫຼື ມີຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານອື່ນໆ;

3. ມີມາດຕະຖານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້.

ນາຍຕຳຫຼວດທີ່ໄດ້ຮັບການແຕ່ງຕັ້ງຕຳແໜ່ງສູງກວ່າຊັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້ ຕ້ອງໄດ້ມີການດັດແກ້ຊັ້ນໃຫ້ເໝາະສົມ ແລະ ສອດຄ່ອງກັບກົດໝາຍສະບັບນີ້ ແຕ່ກຳນົດເວລາການເລື່ອນຊັ້ນ ຕ້ອງເຖິງສອງສ່ວນສາມ.

ໃນກໍລະນີ ນາຍຕຳຫຼວດ ທີ່ມີຊັ້ນແຕ່ ພັນໂທລົງມາ ເມື່ອຮອດກຳນົດເວລາການເລື່ອນຊັ້ນ ແຕ່ຫາກຍັງບໍ່ຄົບມາດຕະຖານ ແລະ ເງື່ອນໄຂ ກໍຈະບໍ່ໄດ້ຮັບການເລື່ອນຊັ້ນ ແຕ່ມີການພິຈາລະນາໄປແຕ່ລະປີ ຊຶ່ງບໍ່ໃຫ້ເກີນໜຶ່ງຮອບຂອງກຳນົດເວລາການເລື່ອນຊັ້ນຂອງແຕ່ລະຊັ້ນ, ຖ້າຮອດກຳນົດໜຶ່ງຮອບຫາກ ຍັງບໍ່ໄດ້ຮັບການເລື່ອນຊັ້ນ ຈະໄດ້ຮັບນະໂຍບາຍຍົກຂັ້ນເງິນເດືອນຂຶ້ນອີກໜຶ່ງຂັ້ນ, ຖ້າວ່າມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ກໍຈະໄດ້ຮັບການພິຈາລະນາໃຫ້ເລື່ອນຊັ້ນ.

### ມາດຕາ 30 (ປັບປຸງ) ສິດຕົກລົງກ່ຽວກັບຊັ້ນຂອງນາຍ ແລະ ພົນຕຳຫຼວດ

ສິດໃນການຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ, ປົດຊັ້ນ ນາຍ ແລະ ພົນຕຳຫຼວດ ມີ ດັ່ງນີ້:

1. ປະທານປະເທດ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ນາຍພົນ ຕາມການສະເໜີຂອງນາຍົກລັດຖະມົນຕີ;

2. ນາຍົກລັດຖະມົນຕີ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ພັນເອກ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ;

3. ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ຮ້ອຍເອກ, ພັນຕີ ແລະ ພັນໂທ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ;

4. ຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ຮ້ອຍຕີ ແລະ ຮ້ອຍໂທ ຕາມການສະເໜີຂອງກົມກ່ຽວຂ້ອງ;

5. ຫົວໜ້າຫ້ອງວ່າການກະຊວງ, ກົມໃຫຍ່, ກົມ, ກອງບັນຊາການ, ຜູ້ອຳນວຍການວິທະຍາຄານ, ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ວາທີຮ້ອຍຕີ ລົງມາເຖິງພົນຕຳຫຼວດ ຊັ້ນສອງ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ຕາມການເຫັນດີຂອງກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ.

## ໝວດທີ 2
## ຕຳແໜ່ງຂອງນາຍຕຳຫຼວດ

### ມາດຕາ 31 (ປັບປຸງ) ຕຳແໜ່ງຂອງນາຍຕຳຫຼວດ

ຕຳແໜ່ງຂອງນາຍຕຳຫຼວດ ແບ່ງອອກເປັນສາມຂັ້ນ ດັ່ງນີ້:

ກະຊວງປ້ອງກັນຄວາມສະຫງົບ ປະກອບດ້ວຍ:

1. ລັດຖະມົນຕີ ແລະ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ;

2. ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງວ່າການກະຊວງ, ກົມໃຫຍ່, ກົມ, ກອງບັນຊາການ, ຜູ້ອຳນວຍການວິທະຍາຄານທີ່ຂຶ້ນກັບກະຊວງ;

3. ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ, ກົມ, ຫ້ອງຫຼຸບເທົ່າກົມ, ໂຮງຮຽນ, ໂຮງໝໍ, ສູນທີ່ຂຶ້ນກັບຫ້ອງວ່າການກະຊວງ, ກົມໃຫຍ່;

4. ຫົວໜ້າ ແລະ ຮອງຫົວໜ້າ ພະແນກ, ຫ້ອງຄູ, ຄະນະພາກວິຊາ ທີ່ຂຶ້ນກັບວິທະຍາຄານ, ຄ້າຍຂຶ້ນກັບກົມ, ກອງພັນ, ໂຮງຮຽນ ທີ່ຂຶ້ນກັບກົມ, ກອງບັນຊາການ ແລະ ກອງວິຊາສະເພາະ;

5. ຫົວໜ້າ ແລະ ຮອງຫົວໜ້າ ພະແນກ, ຄ້າຍ ແລະ ດ່ານສາກົນຂອງກົມ ທີ່ຂຶ້ນກັບຫ້ອງວ່າການກະຊວງ, ກົມໃຫຍ່;

6. ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານ, ໝວດ ແລະ ໝູ່ ວິຊາສະເພາະ.

ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ປະກອບດ້ວຍ:

1. ຫົວໜ້າ ແລະ ຮອງຫົວໜ້າ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;

2. ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ, ຫ້ອງ, ກອງພັນ, ກອງຮ້ອຍ ແລະ ໂຮງຮຽນຊັ້ນກາງທີ່ຂຶ້ນກັບກອງບັນຊາການ;

3. ຫົວໜ້າ ແລະ ຮອງຫົວໜ້າ ພະແນກ, ຄ້າຍ, ໂຮງໝໍ, ໂຮງຮຽນຊັ້ນຕົ້ນ ແລະ ດ່ານສາກົນ;

4. ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານ, ກອງວິຊາສະເພາະ, ໝວດ ແລະ ໝູ່ວິຊາສະເພາະ.

ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ ປະກອບດ້ວຍ:

1. ຫົວໜ້າ ແລະ ຮອງຫົວໜ້າ ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ;

2. ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ, ພະແນກ, ດ່ານທ້ອງຖິ່ນ, ສະຖານີ ແລະ ປ້ອງກັນຄວາມສະຫງົບກຸ່ມບ້ານ;

3. ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານ, ກອງວິຊາສະເພາະ, ໝວດ, ໝູ່ ແລະ ດ່ານປະເພນີວິຊາສະເພາະ.

ນອກຈາກຕຳແໜ່ງທີ່ກ່າວມາເທິງນີ້ ຍັງມີຕຳແໜ່ງຫຼຸບເທົ່າ.

**ມາດຕາ 32 (ປັບປຸງ) ການກຳນົດຊັ້ນໃສ່ຕຳແໜ່ງຂອງຜູ້ບັນຊາແຕ່ລະຂັ້ນ**

ການກຳນົດຊັ້ນໃສ່ແຕ່ລະຕຳແໜ່ງຂອງຜູ້ບັນຊາແຕ່ລະຂັ້ນ ໃຫ້ປະຕິບັດ ດັ່ງນີ້:

ກະຊວງປ້ອງກັນຄວາມສະຫງົບ:

1. ລັດຖະມົນຕີ ຕ້ອງມາຈາກກຳລັງປະກອບອາວຸດ ແລະ ຕ້ອງແມ່ນຊັ້ນ ພົນຕີ ຫາ ພົນເອກ;

2. ຮອງລັດຖະມົນຕີ ຕ້ອງແມ່ນຊັ້ນພົນຈັດຕະວາ ຂຶ້ນໄປ;

3. ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງວ່າການກະຊວງ, ກົມໃຫຍ່, ຫົວໜ້າກົມ, ຫົວໜ້າກອງບັນຊາການ ແລະ ຜູ້ອຳນວຍການວິທະຍາຄານຂຶ້ນກັບກະຊວງ ຕ້ອງແມ່ນຊັ້ນພົນຈັດຕະວາ ຂຶ້ນໄປ;

4. ຮອງຫົວໜ້າ ກົມ, ກອງບັນຊາການ ແລະ ຮອງຜູ້ອຳນວຍການວິທະຍາຄານຂຶ້ນກັບກະຊວງ, ຫົວໜ້າ ແລະ ຮອງຫົວໜ້າ ກົມ, ຫ້ອງ, ສູນ, ໂຮງຮຽນ, ໂຮງໝໍ ຂຶ້ນກັບຫ້ອງວ່າການກະຊວງ, ກົມໃຫຍ່ ຕ້ອງແມ່ນຊັ້ນພັນເອກ ຂຶ້ນໄປ;

5. ຫົວໜ້າ ແລະ ຮອງຫົວໜ້າ ພະແນກ, ຫ້ອງຄູ, ຄະນະພາກວິຊາ, ກອງພັນ, ຄ້າຍ, ກອງວິຊາສະເພາະທີ່ຂຶ້ນກັບກົມ, ກອງບັນຊາການ, ວິທະຍາຄານ ຕ້ອງແມ່ນຊັ້ນພັນໂທ ຂຶ້ນໄປ;

6. ຫົວໜ້າ ແລະ ຮອງຫົວໜ້າ ພະແນກ, ດ່ານສາກົນ, ຄ້າຍ, ກອງຮ້ອຍ, ກອງວິຊາສະເພາະຂອງກົມ ທີ່ຂຶ້ນກັບຫ້ອງວ່າການກະຊວງ, ກົມໃຫຍ່ ຕ້ອງແມ່ນຊັ້ນພັນຕີ ຂຶ້ນໄປ;

7. ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານ, ໝວດວິຊາສະເພາະ ຕ້ອງແມ່ນຊັ້ນຮ້ອຍ ເອກ ຂຶ້ນໄປ;

8. ຫົວໜ້າ ແລະ ຮອງຫົວໜ້າ ໝູ່ວິຊາສະເພາະ ຕ້ອງແມ່ນຊັ້ນຮ້ອຍໂທ ຂຶ້ນໄປ.

ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ:

1. ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ຕ້ອງແມ່ນຊັ້ນພັນເອກ ຂຶ້ນໄປ;

2. ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ຕ້ອງແມ່ນຊັ້ນພັນໂທ ຂຶ້ນໄປ;

3. ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ, ຫ້ອງວິຊາສະເພາະ ກອງພັນ ແລະ ໂຮງຮຽນຊັ້ນກາງ ຕ້ອງແມ່ນຊັ້ນພັນໂທ ຂຶ້ນໄປ;

4. ຫົວໜ້າ ແລະ ຮອງຫົວໜ້າ ພະແນກ, ດ່ານສາກົນ, ຄ້າຍ, ໂຮງໝໍ, ໂຮງຮຽນຊັ້ນຕົ້ນ ແລະ ກອງຮ້ອຍ ຕ້ອງແມ່ນຊັ້ນພັນຕີ ຂຶ້ນໄປ;

5. ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານ, ກອງວິຊາສະເພາະ ແລະ ໝວດວິຊາສະເພາະ ຕ້ອງແມ່ນຊັ້ນຮ້ອຍເອກ ຂຶ້ນໄປ;

6. ຫົວໜ້າ ແລະ ຮອງຫົວໜ້າໝູ່ ວິຊາສະເພາະ ຕ້ອງແມ່ນຊັ້ນຮ້ອຍໂທ ຂຶ້ນໄປ.

ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ:

1. ຫົວໜ້າ ແລະ ຮອງຫົວໜ້າ ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ ຕ້ອງແມ່ນຊັ້ນພັນໂທ ຂຶ້ນໄປ;

2. ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ, ພະແນກ, ດ່ານທ້ອງຖິ່ນ, ສະຖານີ ແລະ ປ້ອງກັນຄວາມສະຫງົບກຸ່ມບ້ານ ຕ້ອງແມ່ນຊັ້ນພັນຕີ ຂຶ້ນໄປ;

3. ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານ, ດ່ານປະເພນີ, ກອງວິຊາສະເພາະ, ໝວດວິຊາສະເພາະ ຕ້ອງແມ່ນຊັ້ນຮ້ອຍເອກ ຂຶ້ນໄປ;

4. ຫົວໜ້າ ແລະ ຮອງຫົວໜ້າໝູ່ວິຊາສະເພາະ ຊັ້ນຮ້ອຍໂທ ຂຶ້ນໄປ.

ໃນກໍລະນີ ນາຍຕຳຫຼວດ ທີ່ເຮັດວຽກງານພິເສດ, ຢູ່ເຂດຫຍຸ້ງຍາກທຸລະກັນດານ ຈະປະດັບຊັ້ນສູງກວ່າຊັ້ນທີ່ໄດ້ກຳນົດໄວ້ໃນມາດຕານີ້ກໍໄດ້ ແຕ່ບໍ່ໃຫ້ກາຍໜຶ່ງຊັ້ນ.

**ມາດຕາ 33 (ໃໝ່) ການຫຼຸບຂັ້ນຕຳແໜ່ງຂອງນາຍຕຳຫຼວດ**

ການຫຼຸບຂັ້ນ ຕຳແໜ່ງບັນຊາຂອງນາຍຕຳຫຼວດ ຈັດເປັນ 16 ຂັ້ນ ດັ່ງນີ້:

1. ຕຳແໜ່ງບັນຊາຂັ້ນ 1 ແມ່ນ ລັດຖະມົນຕີ;
2. ຕຳແໜ່ງບັນຊາຂັ້ນ 2 ແມ່ນ ຮອງລັດຖະມົນຕີ;
3. ຕຳແໜ່ງບັນຊາຂັ້ນ 3 ແມ່ນ:
   - ຫົວໜ້າຫ້ອງວ່າການກະຊວງ;
   - ຫົວໜ້າບັນດາກົມໃຫຍ່.
4. ຕຳແໜ່ງບັນຊາຂັ້ນ 4 ແມ່ນ:
   - ບັນດາຮອງຫົວໜ້າ ຫ້ອງວ່າການກະຊວງ ແລະ ກົມໃຫຍ່;
   - ຫົວໜ້າບັນດາ ກົມ, ກອງບັນຊາການ, ຜູ້ອຳນວຍການວິທະຍາຄານ ທີ່ຂຶ້ນກັບກະຊວງ.
5. ຕຳແໜ່ງບັນຊາຂັ້ນ 5 ແມ່ນ:
   - ບັນດາຮອງຫົວໜ້າໃນຕຳແໜ່ງບັນຊາຂັ້ນ 4 ຂີດຫຍໍ້ໜ້າ 2 ຂອງມາດຕານີ້;
   - ຫົວໜ້າບັນດາກົມ, ຫົວໜ້າບັນດາຫ້ອງ, ຫົວໜ້າອຳນວຍການໂຮງຮຽນ, ໂຮງໝໍ, ຄະນະບັນນາທິການຂ່າວສານ ແລະ ສູນ ທີ່ຂຶ້ນກັບຫ້ອງວ່າການກະຊວງ ແລະ ກົມໃຫຍ່;
   - ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ.
6. ຕຳແໜ່ງບັນຊາຂັ້ນ 6 ແມ່ນ:
   - ບັນດາຮອງຫົວໜ້າໃນຕຳແໜ່ງບັນຊາຂັ້ນ 5 ຂີດຫຍໍ້ໜ້າ 2 ແລະ 3 ຂອງມາດຕານີ້;
   - ຫົວໜ້າບັນດາ ຫ້ອງ, ພະແນກ, ກອງພັນ, ຄ້າຍ, ກອງວິຊາສະເພາະ ຂອງກົມ, ກອງບັນຊາການ ທີ່ຂຶ້ນກັບກະຊວງ;
   - ຫົວໜ້າຫ້ອງ, ຫົວໜ້າຄະນະພາກວິຊາ ທີ່ຂຶ້ນກັບວິທະຍາຄານ.
7. ຕຳແໜ່ງບັນຊາຂັ້ນ 7 ແມ່ນ:
   - ບັນດາຮອງຫົວໜ້າໃນຕຳແໜ່ງບັນຊາຂັ້ນ 6 ຂີດຫຍໍ້ໜ້າ 2 ແລະ 3 ຂອງມາດຕານີ້;
   - ຫົວໜ້າ ພະແນກ ແລະ ດ່ານສາກົນ ຂອງກົມ, ຫ້ອງ, ໂຮງຮຽນ, ໂຮງໝໍ, ຄະນະບັນນາທິການຂ່າວສານ ແລະ ສູນ ທີ່ຂຶ້ນກັບຫ້ອງວ່າການກະຊວງ ແລະ ກົມໃຫຍ່;
   - ຫົວໜ້າບັນດາກອງພັນຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;
   - ຫົວໜ້າບັນດາ ຫ້ອງ, ໂຮງຮຽນຊັ້ນກາງ ທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;
   - ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ.
8. ຕຳແໜ່ງບັນຊາຂັ້ນ 8 ແມ່ນ:
   - ບັນດາຮອງຫົວໜ້າໃນຕຳແໜ່ງບັນຊາຂັ້ນ 7 ຂີດຫຍໍ້ໜ້າ 2, 3, 4 ແລະ 5 ຂອງມາດຕານີ້;

- ຫົວໜ້າພະແນກຂອງ ຫ້ອງ, ຄະນະພາກວິຊາ ທີ່ຂຶ້ນກັບກົມ, ວິທະຍາຄານ ແລະ ກອງບັນຊາການ ທີ່ຂຶ້ນກັບກະຊວງໂດຍກົງ;

- ຫົວໜ້າໜ່ວຍງານຂອງພະແນກ ຂຶ້ນກັບກົມ ທີ່ຂຶ້ນກັບກະຊວງ;

- ຫົວໜ້າບັນດາກອງຮ້ອຍເອກະລາດ ແລະ ກອງວິຊາສະເພາະຂອງກອງບັນຊາການ ທີ່ຂຶ້ນກັບກະຊວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ.

9. ຕໍາແໜ່ງບັນຊາຂັ້ນ 9 ແມ່ນ:

- ບັນດາຮອງຫົວໜ້າໃນຕໍາແໜ່ງບັນຊາ ຂັ້ນ 8 ຂີດທຍໍ້ໜ້າ 2, 3 ແລະ 4 ຂອງມາດຕານີ້;

- ຫົວໜ້າ ພະແນກ ແລະ ດ່ານສາກົນ ຂອງຫ້ອງ, ໂຮງຮຽນ ຊັ້ນກາງ ທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;

- ຫົວໜ້າບັນດາກອງຮ້ອຍ ທີ່ຂຶ້ນກັບກອງພັນຂອງກອງບັນຊາການ ທີ່ຂຶ້ນກັບກະຊວງໂດຍກົງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;

- ຫົວໜ້າບັນດາ ພະແນກ, ສະຖານີ ທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ;

- ຫົວໜ້າບັນດາຄ້າຍ ທີ່ຂຶ້ນກັບຫ້ອງຄຸມຂັງ, ດັດສ້າງ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;

- ຫົວໜ້າບັນດາປ້ອງກັນຄວາມສະຫງົບກຸ່ມບ້ານ.

10. ຕໍາແໜ່ງບັນຊາຂັ້ນ 10 ແມ່ນ:

- ບັນດາຮອງຫົວໜ້າໃນຕໍາແໜ່ງບັນຊາຂັ້ນ 9 ຂີດທຍໍ້ໜ້າ 2, 3, 4 ແລະ 5 ຂອງມາດຕານີ້;

- ຫົວໜ້າບັນດາກອງ, ໜ່ວຍງານ ຂອງບັນດາພະແນກ ແລະ ສູນ ທີ່ຂຶ້ນກັບຫ້ອງວ່າການ ແລະ ບັນດາກົມໃຫຍ່;

- ຫົວໜ້າດ່ານທ້ອງຖິ່ນ;

- ຫົວໜ້າພະແນກໂຮງຮຽນປ້ອງກັນຄວາມສະຫງົບ ຊັ້ນຕົ້ນ;

- ຫົວໜ້າໝວດປ້ອງກັນເລຂາທິການໃຫຍ່, ປະທານປະເທດ, ປະທານສະພາແຫ່ງຊາດ ແລະ ນາຍົກລັດຖະມົນຕີ.

11. ຕໍາແໜ່ງບັນຊາຂັ້ນ 11 ແມ່ນ:

- ບັນດາຮອງຫົວໜ້າໃນຕໍາແໜ່ງບັນຊາຂັ້ນ 10 ຂີດທຍໍ້ໜ້າ 2, 3, 4 ແລະ 5 ຂອງມາດຕານີ້;

- ຫົວໜ້າໜ່ວຍງານ, ກອງວິຊາສະເພາະ ຂອງພະແນກສັງກັດຫ້ອງຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;

- ຫົວໜ້າໜ່ວຍງານ, ກອງວິຊາສະເພາະ, ດ່ານປະເພນີ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ;

- ຫົວໜ້າຄ້າຍກັກຂັງຊົ່ວຄາວ;

- ຫົວໜ້າໝູ່ປ້ອງກັນກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ.

12. ຕຳແໜ່ງບັນຊາຂັ້ນ 12 ແມ່ນ:

- ບັນດາຮອງຫົວໜ້າໃນຕຳແໜ່ງບັນຊາຂັ້ນ 11 ຂີດຫຍໍ້ໜ້າ 2, 3 ແລະ 4 ຂອງມາດຕານີ້;
- ຫົວໜ້າໂຮງຮຽນອະນຸບານ ຂຶ້ນກັບກົມ, ວິທະຍາຄານ.

13. ຕຳແໜ່ງບັນຊາຂັ້ນ 13 ແມ່ນ:

- ຮອງຫົວໜ້າໃນຕຳແໜ່ງບັນຊາຂັ້ນ 12 ຂີດຫຍໍ້ໜ້າ 2 ຂອງມາດຕານີ້;
- ຫົວໜ້າໝວດ.

14. ຕຳແໜ່ງບັນຊາຂັ້ນ 14 ແມ່ນ ຮອງຫົວໜ້າໝວດ.

15. ຕຳແໜ່ງບັນຊາຂັ້ນ 15 ແມ່ນ ຫົວໜ້າໝູ່.

16. ຕຳແໜ່ງບັນຊາຂັ້ນ 16 ແມ່ນ ຮອງຫົວໜ້າໝູ່.

**ມາດຕາ 34 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຂອງນາຍຕຳຫຼວດ**

ນາຍຕຳຫຼວດຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ມີ ດັ່ງນີ້:

1. ປະທານປະເທດ ເປັນຜູ້ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ຕາມການສະເໜີຂອງນາຍົກລັດຖະມົນຕີ ພາຍຫຼັງທີ່ສະພາແຫ່ງຊາດຮັບຮອງເອົາ;

2. ນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການກະຊວງ, ຫົວໜ້າ ແລະ ຮອງຫົວໜ້າກົມໃຫຍ່, ຫົວໜ້າກົມ, ຫົວໜ້າກອງບັນຊາການ, ຜູ້ອຳນວຍການວິທະຍາຄານ ທີ່ຂຶ້ນກັບກະຊວງ ແລະ ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ;

3. ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ ຄື:

- ຂັ້ນກະຊວງ: ຮອງຫົວໜ້າກົມ, ຮອງຫົວໜ້າ ກອງບັນຊາການ, ຮອງຜູ້ອຳນວຍການວິທະຍາຄານ, ຫົວໜ້າ ແລະ ຮອງຫົວໜ້າກົມ, ຫ້ອງ, ສູນ, ໂຮງໝໍ ແລະ ໂຮງຮຽນ ທີ່ຂຶ້ນກັບຫ້ອງວ່າການກະຊວງ, ກົມໃຫຍ່;
- ຂັ້ນແຂວງ ແລະ ຂັ້ນເມືອງ: ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ, ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງ, ກອງພັນ, ກອງຮ້ອຍເອກະລາດ, ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ, ຫົວໜ້າ ແລະ ຮອງຫົວໜ້າໂຮງຮຽນຊັ້ນກາງ.

4. ຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງ, ພະແນກ, ຄ້າຍ ທີ່ຂຶ້ນກັບກົມ ແລະ ຫ້ອງຄູ, ຄະນະພາກວິຊາ ທີ່ຂຶ້ນກັບວິທະຍາຄານ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງ, ກອງພັນ, ກອງຮ້ອຍ ຂອງກອງບັນຊາການ, ຫົວໜ້າ

ແລະ ຮອງຫົວໜ້າກອງວິຊາສະເພາະ, ຫົວໜ້າ ແລະ ຮອງຫົວໜ້າ ກອງຮ້ອຍ, ຫົວໜ້າ ແລະ ຮອງຫົວໜ້າໂຮງຮຽນຊັ້ນຕົ້ນ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ;

5. ຫົວໜ້າຫ້ອງວ່າການກະຊວງ, ກົມໃຫຍ່, ຫົວໜ້າກົມ, ຜູ້ອຳນວຍການວິທະຍາຄານ, ຫົວໜ້າກອງບັນຊາການ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ພະແນກ, ຄ້າຍ, ດ່ານສາກົນ, ໂຮງໝໍ, ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານ, ຫົວໜ້າ ແລະ ຮອງຫົວໜ້າໝວດ, ຫົວໜ້າ ແລະ ຮອງຫົວໜ້າໝູ່ຂອງກົມ ຫຼື ທຽບເທົ່າທີ່ຂຶ້ນກັບຕົນ ຕາມການເຫັນດີຂອງກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ;

6. ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ພະແນກ, ສະຖານີ, ຄ້າຍ, ດ່ານສາກົນ, ດ່ານທ້ອງຖິ່ນ, ດ່ານປະເພນີ, ກອງ, ໝວດ ແລະ ໝູ່ ວິຊາສະເພາະ ທີ່ຂຶ້ນກັບຕົນ ຕາມການເຫັນດີຂອງກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ.

### ມາດຕາ 35 (ປັບປຸງ) ການງົດຕຳແໜ່ງ ແລະ ການແຕ່ງຕັ້ງນາຍຕຳຫຼວດໃຫ້ດຳລົງຕຳແໜ່ງຊົ່ວຄາວ

ໃນກໍລະນີຮີບດ່ວນ ລັດຖະມົນຕີ, ຫົວໜ້າຫ້ອງວ່າການກະຊວງ, ຫົວໜ້າກົມໃຫຍ່, ຫົວໜ້າກົມ, ຫົວໜ້າກອງບັນຊາການ, ຜູ້ອຳນວຍການວິທະຍາຄານ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ມີສິດ ງົດ ຫຼື ຂໍການຕົກລົງ ປົດຕຳແໜ່ງຂອງຜູ້ຢູ່ໃຕ້ການບັງຄັບບັນຊາຂອງຕົນ ທີ່ບໍ່ປະຕິບັດຄຳສັ່ງ ຫຼື ລະເມີດກົດໝາຍ ແລະ ລະບຽບການ ຊຶ່ງຈະກໍ່ຄວາມເສຍຫາຍໃຫ້ແກ່ກົມກອງ ແລະ ຜົນປະໂຫຍດຂອງປະເທດຊາດ ແລ້ວແຕ່ງຕັ້ງຜູ້ໃໝ່ມາຮັບຜິດຊອບແທນຊົ່ວຄາວ, ພ້ອມກັນນັ້ນກໍຕ້ອງລາຍງານໃຫ້ຂັ້ນເທິງຖັດຕົນຊາບໃນທັນໃດ ແລະ ສະເໜີຂັ້ນເທິງແຕ່ງຕັ້ງເປັນທາງການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້.

### ມາດຕາ 36 (ປັບປຸງ) ການໃຫ້ຕຳແໜ່ງຕ່ຳກວ່າຂັ້ນ

ການໃຫ້ຕຳແໜ່ງຕ່ຳກວ່າຂັ້ນ ຈະປະຕິບັດໄດ້ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການເພີ່ມທະວີການບັນຊາໃນການປະຕິບັດໜ້າທີ່ພິເສດ;

2. ມີການປ່ຽນແປງ ການຈັດຕັ້ງຂອງກົມກອງ: ກົງຈັກການຈັດຕັ້ງມີການປ່ຽນແປງ ຊຶ່ງບໍ່ຈຳເປັນຕ້ອງມີຕຳແໜ່ງທີ່ກ່ຽວຂ້ອງນັ້ນອີກ;

3. ມີການສັບຊ້ອນໃໝ່ ທີ່ແທດເໝາະກັບຄວາມຮູ້, ຄວາມສາມາດ ແລະ ສຸຂະພາບຂອງນາຍຕຳຫຼວດ;

4. ນາຍຕຳຫຼວດບໍ່ມີເງື່ອນໄຂຄົບທີ່ຈະຮັບຕຳແໜ່ງເທົ່າກັບຂັ້ນ.

**ມາດຕາ 37 (ປັບປຸງ) ການແຕ່ງຕັ້ງນາຍຕຳຫຼວດ ໄປປະຕິບັດໜ້າທີ່ຢູ່ຂະແໜງການອື່ນ**

ນາຍຕຳຫຼວດ ຈະຖືກແຕ່ງຕັ້ງໄປປະຕິບັດໜ້າທີ່ ຢູ່ຂະແໜງການອື່ນ ຢູ່ທັງພາຍໃນ ແລະ ຕ່າງປະເທດ ໃນກໍລະນີທີ່ມີຄວາມຮຽກຮ້ອງຕ້ອງການອັນຈຳເປັນ ໃນການປົກປັກຮັກສາຄວາມສະຫງົບຂອງປະເທດຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຕາມການມອບໝາຍຂອງຂັ້ນເທິງ.

ນາຍຕຳຫຼວດ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ໄປປະຕິບັດໜ້າທີ່ນັ້ນ ຈະໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ບັນດາຂະແໜງການ ທີ່ນາຍຕຳຫຼວດໄດ້ໄປປະຕິບັດໜ້າທີ່ຢູ່ນັ້ນ ຕ້ອງມີຄວາມຮັບຜິດຊອບໃນການຮັກສາຄວາມລັບ, ຮັບປະກັນເງື່ອນໄຂເຮັດວຽກ ແລະ ການດຳລົງຊີວິດໃຫ້ພະນັກງານຜູ້ນັ້ນ ເພື່ອເຮັດສຳເລັດໜ້າທີ່ ຕາມການມອບໝາຍ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 38 (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້ :

1. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ, ບໍ່ໃຫ້ການຮ່ວມມື ຕໍ່ການປະຕິບັດໜ້າທີ່ຂອງ ນາຍ ແລະ ພົນຕຳຫຼວດ;

2. ປັ້ນປ່ວນ, ໝິ່ນປະໝາດ, ໃສ່ຮ້າຍປ້າຍສີ, ແບ່ງແຍກ, ມ້າງເພຄວາມສາມັກຄີ ລະຫວ່າງກຳລັງປ້ອງກັນຄວາມສະຫງົບປະຊາຊົນກັບປະຊາຊົນ ແລະ ການຈັດຕັ້ງ;

3. ສວຍໃຊ້, ແອບອ້າງ ແລະ ປອມແປງ ເປັນກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

4. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອແຊກແຊງການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໂດຍບໍ່ຖືກຕ້ອງຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;

5. ແຈ້ງຂໍ້ມູນ ຫຼື ລາຍງານເທັດ ໃຫ້ກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 39 (ປັບປຸງ) ຂໍ້ຫ້າມສຳລັບກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ຫ້າມກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີພຶດຕິກຳ ດັ່ງນີ້:

1. ລະເມີດ ລັດຖະທຳມະນູນ, ກົດໝາຍ, ລະບຽບວິໄນຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແລະ ຮີດຄອງປະເພນີອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ;

2. ອອກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ນະໂຍບາຍ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ທີ່ການຈັດຕັ້ງຂັ້ນເທິງວາງອອກ;

3. ປະລະໜ້າທີ່, ເມີນເສີຍ, ບໍ່ປະຕິບັດຕາມມະຕິ ຫຼື ຄຳສັ່ງຂອງຂັ້ນເທິງ;

4. ຍອມຈຳນົນ ແລະ ປະອາວຸດ ໃນເວລາສູ້ຮົບ;

5. ປະຊາກສົບ ຫຼື ຜູ້ທີ່ໄດ້ຮັບບາດເຈັບ ໃນເວລາປະຕິບັດໜ້າທີ່;

6. ໃຊ້ສິດ, ໜ້າທີ່ຕຳແໜ່ງ ເກີນຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ໃຊ້ສິດ, ໜ້າທີ່ ແລະ ອາວຸດ ນາບຂູ່ປະຊາຊົນ;

8. ສວຍໃຊ້ສິດ, ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ;

9. ເອົາອາວຸດ, ລູກປືນ, ເຄື່ອງແບບ, ບັດຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ບຸກຄົນໃນຄອບຄົວ ແລະ ຜູ້ອື່ນຢືມ, ນຳໃຊ້, ແລກປ່ຽນ, ຊື້ຂາຍຢ່າງເດັດຂາດ;

10. ທຸກການກະທຳ ທີ່ເປັນການແບ່ງແຍກມ້າງເພຄວາມສາມັກຄີພາຍໃນ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VI
# ການຄຸ້ມຄອງ ແລະ ກວດກາ ວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນ
## ໝວດທີ 1
## ການຄຸ້ມຄອງວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນ

### ມາດຕາ 40 (ປັບປຸງ) ອົງການຄຸ້ມຄອງວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ອົງການຄຸ້ມຄອງວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີ ດັ່ງນີ້:

1. ກະຊວງປ້ອງກັນຄວາມສະຫງົບ;
2. ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;
3. ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ;
4. ປ້ອງກັນຄວາມສະຫງົບບ້ານ.

### ມາດຕາ 41 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ

ໃນການຄຸ້ມຄອງວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ແນວທາງ, ແຜນນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຂອງກຳລັງປ້ອງກັນຄວາມສະຫງົບ ໃຫ້ນາຍ ແລະ ພົນຕຳຫຼວດ ໃນຂອບເຂດທົ່ວປະເທດ;

4. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ເອກະສານທາງລັດຖະການ ເພື່ອຄຸ້ມຄອງມະຫາພາກໃນຂະແໜງການຂອງຕົນ;

5. ຊີ້ນໍາ, ຄຸ້ມຄອງ ແລະ ກວດກາ ຕາມສາຍຕັ້ງ ໃນການຈັດຕັ້ງປະຕິບັດວຽກງານ ແລະ ບຸກຄະລາກອນຂອງຂະແໜງການຕົນ;

6. ກໍານົດແຜນການສ້າງ, ບໍາລຸງຍົກລະດັບ, ຝຶກອົບຮົມ ນາຍ ແລະ ພົນຕໍາຫຼວດ ໃນຂອບເຂດທົ່ວປະເທດ ໃຫ້ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານກໍາລັງປ້ອງກັນຄວາມສະຫງົບ ໃນແຕ່ລະໄລຍະ;

7. ກໍານົດການຈັດຕັ້ງ, ມາດຕະຖານ, ເງື່ອນໄຂການບັນຈຸນາຍ ແລະ ພົນຕໍາຫຼວດ;

8. ຕິດຕາມ, ກວດກາ ການຈັດຕັ້ງ, ຍົກຍ້າຍ, ການບັນຈຸ, ສັບຊ້ອນ ນາຍ ແລະ ພົນຕໍາຫຼວດ;

9. ຄົ້ນຄວ້າວິທະຍາສາດ, ເຜີຍແຜ່ ແລະ ແນະນໍາ ການນໍາໃຊ້ວິທະຍາສາດ, ວິທະຍາການໃໝ່ເຂົ້າໃນການພັດທະນາຂະແໜງການຂອງຕົນ;

10. ພິຈາລະນາແກ້ໄຂຄໍາສະເໜີ, ຄໍາຮ້ອງຂອງນາຍ ແລະ ພົນຕໍາຫຼວດ ຫຼື ພົນລະເມືອງ;

11. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

12. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການເຫັນດີຂອງລັດຖະບານ;

13. ສະຫຼຸບ, ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 42 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປົກປັກຮັກສາຄວາມສະຫງົບທາງດ້ານ ການເມືອງ, ເສດຖະກິດ ແລະ ສັງຄົມ;

2. ຄົ້ນຄວ້າ, ເຊື່ອມຊຶມ, ກໍາແໜ້ນແນວທາງ, ນະໂຍບາຍຂອງພັກ, ລັດ; ມະຕິ, ຄໍາສັ່ງ, ແຜນການຂອງກະຊວງປ້ອງກັນຄວາມສະຫງົບ ເພື່ອຫັນເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ແລ້ວຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;

3. ໂຄສະນາສຶກສາອົບຮົມການເມືອງ, ແນວຄິດ, ແນວທາງຂອງພັກ, ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ ຂອງກໍາລັງປ້ອງກັນຄວາມສະຫງົບ ໃຫ້ນາຍ ແລະ ພົນຕໍາຫຼວດ;

4. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ເອກະສານທາງລັດຖະການ;

5. ຈັດຕັ້ງປະຕິບັດວຽກງານຕາມຄໍາສັ່ງຂອງສາຍຕັ້ງ ແລະ ຂອງຄະນະປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນຂອງຕົນຢ່າງເຂັ້ມງວດ;

6. ຊີ້ນຳ, ຄຸ້ມຄອງ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ;

7. ຈັດຕັ້ງປະຕິບັດແຜນການກໍ່ສ້າງ, ບຳລຸງ, ພັດທະນາ ແລະ ຄຸ້ມຄອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

8. ສ້າງແຜນ ແລະ ຄຸ້ມຄອງນຳໃຊ້ງົບປະມານ, ວັດຖຸ, ຍຸດໂທປະກອນ, ພາຫະນະເຕັກນິກວິຊາສະເພາະ, ບໍລິຫານ ແລະ ອອກແຮງສ້າງພະລາທິການກັບທີ່;

9. ປະສານສົມທົບກັບກອງບັນຊາການທະຫານ ແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

10. ພົວພັນຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ, ລາຍງານການປະຕິບັດວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນຕໍ່ກະຊວງປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 43 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນ ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປົກປັກຮັກສາຄວາມສະຫງົບທາງດ້ານ ການເມືອງ, ເສດຖະກິດ ແລະ ສັງຄົມ;

2. ຈັດຕັ້ງປະຕິບັດມະຕິ, ຄຳສັ່ງ, ແຜນການຂອງຂັ້ນເທິງ ແລະ ຂອງຄະນະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂັ້ນຂອງຕົນຢ່າງເຂັ້ມງວດ;

3. ໂຄສະນາ ສຶກສາອົບຮົມ ການເມືອງ, ແນວຄິດ, ແນວທາງຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຂອງກຳລັງປ້ອງກັນຄວາມສະຫງົບ ໃຫ້ນາຍ ແລະ ພົນຕຳຫຼວດ;

4. ຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຂອງ ປ້ອງກັນຄວາມສະຫງົບກຸ່ມບ້ານ ແລະ ປ້ອງກັນຄວາມສະຫງົບບ້ານ;

5. ປະສານສົມທົບກັບ ກອງບັນຊາການທະຫານ ເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

6. ສະຫຼຸບ, ລາຍງານ ການປະຕິບັດວຽກງານກຳລັງປ້ອງຄວາມສະຫງົບປະຊາຊົນຕໍ່ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 44 (ປັບປຸງ) ສິດ ແລະ ໜ້າທີ່ ຂອງປ້ອງກັນຄວາມສະຫງົບບ້ານ**

ປ້ອງກັນຄວາມສະຫງົບບ້ານ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ຈັດຕັ້ງປະຕິບັດແນວທາງ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ຄໍາສັ່ງຂອງຂັ້ນເທິງ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

2. ຈັດຕັ້ງຝຶກຝົນຫຼໍ່ຫຼອມຕົນເອງ, ຍົກສູງລະດັບການສຶກສາ, ວັດທະນະທໍາ, ວິຊາສະເພາະຕໍາຫຼວດ;

3. ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ;

4. ສຶກສາອົບຮົມ ປະຊາຊົນ ໃຫ້ເຊື່ອມຊຶມແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນ, ເຄົາລົບ ແລະ ປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ລະບຽບການ ແລະ ກົດລະບຽບບ້ານ, ປຸກລະດົມ, ຂົນຂວາຍປະຊາຊົນ ປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບ;

5. ຊອກຮູ້, ເກັບກໍາສະພາບການ, ກົນອຸບາຍ, ເລ່ຫຼ່ຽມການເຄື່ອນໄຫວຂອງບຸກຄົນ ຫຼື ກຸ່ມຄົນບໍ່ດີ, ຍົກສູງສະຕິລະວັງຕົວ, ກຽມພ້ອມປ້ອງກັນ, ສະກັດກັ້ນ, ຕອບຕ້ານ ທຸກການລະເມີດກົດໝາຍ ແລະ ລະບຽບການ;

6. ຈັດຕັ້ງກໍາລັງອອກເຄື່ອນໄຫວ, ກວດກາລາດຕະເວນ, ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຢ່າງເປັນປົກກະຕິ;

7. ໄດ້ຮັບການປະກອບອາວຸດ ແລະ ອຸປະກອນທີ່ຈໍາເປັນ ເພື່ອຮັບໃຊ້ເຂົ້າໃນການເຮັດໜ້າທີ່ຂອງຕົນ;

8. ໄດ້ຮັບນະໂຍບາຍອຸດໜູນ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ບຽບການ;

9. ກວດກາ, ເກັບກໍາສໍາມະໂນຄົວ ລວມທັງຄົນຖິ່ນອື່ນ ທີ່ມາພັກເຊົາ ໃນແຕ່ລະໄລຍະ;

10. ຮັກສາຄວາມປອດໄພ ໃຫ້ຊາວຕ່າງປະເທດທີ່ມາເຄື່ອນໄຫວພັກເຊົາ;

11. ປະສານສົມທົບກັບກໍາລັງກອງຫຼອນ, ກໍາລັງປ້ອງກັນຕົວ, ກໍາລັງຮັກສາຄວາມປອດໄພ, ກໍາລັງປ້ອງກັນຄວາມສະຫງົບກຸ່ມບ້ານ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

12. ສະຫຼຸບ, ລາຍງານ ການປະຕິບັດວຽກງານຂອງຕົນຕໍ່ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມ, ກໍ່ສ້າງ, ບຳລຸງ ແລະ ສະໜອງພະນັກງານວິຊາການ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ເພື່ອປະຕິບັດສຳເລັດໜ້າທີ່ວຽກງານ;

2. ຄົ້ນຄວ້າ, ສັບຊ້ອນ ແລະ ມອບໝາຍໜ້າທີ່ໃຫ້ ນາຍ ແລະ ພົນຕຳຫຼວດ ທີ່ຍົກຍ້າຍຈາກກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມາເຮັດໜ້າທີ່ຢູ່ຝ່າຍປົກຄອງຢ່າງເໝາະສົມ;

3. ຊ່ວຍເຫຼືອດ້ານງົບປະມານ, ສະຖານທີ່ເຮັດວຽກ, ທີ່ພັກອາໄສ, ພາຫະນະ, ອຸປະກອນເຕັກນິກ, ວິຊາສະເພາະຕາມເງື່ອນໄຂ ແລະ ຄວາມສາມາດຂອງຕົນ;

4. ຊ່ວຍເຫຼືອເບິ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນລາວ, ຄອບຄົວຜູ້ເສຍສະລະຊີວິດ, ຜູ້ເສຍອົງຄະ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານບຳນານ ແລະ ຜູ້ທີ່ພວມປະຕິບັດໜ້າທີ່ໃນຂອບເຂດທີ່ຕົນຮັບຜິດຊອບ.

## ໝວດທີ 2
## ການກວດກາ

**ມາດຕາ 46 (ປັບປຸງ) ອົງການກວດກາວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ອົງການກວດກາວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານກຳລັງປ້ອງກັນຄວາມຫງົບປະຊາຊົນ ຕາມທີ່ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 47 (ໃໝ່) ເນື້ອໃນການກວດກາ**

ການກວດກາ ມີເນື້ອໃນ ດັ່ງນີ້:

1. ການອອກນິຕິກຳ ຂອງອົງການຄຸ້ມຄອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

2. ການຈັດຕັ້ງປະຕິບັດວຽກງານກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

3. ການປະຕິບັດຫຼັກການ, ການນຳໃຊ້ສິດ, ການປະຕິບັດໜ້າທີ່, ພັນທະ, ຂໍ້ຫ້າມ ແລະ ການດຳລົງຊີວິດ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

4. ການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບກຳລັງປ້ອງກັນຄວາມສະຫງົບປະຊາຊົນ;

5. ບັນຫາອື່ນ ທີ່ພົວພັນກັບກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ໃໝ່) ຮູບການການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ;

2. ການກວດກາໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາປົກກະຕິ ແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ຈຳເປັນ ແລະ ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ວັນສ້າງຕັ້ງ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

**ມາດຕາ 49 ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແມ່ນ ວັນທີ 5 ເມສາ 1961.

ທຸກໆປີ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ພ້ອມກັບປະຊາຊົນລາວບັນດາເຜົ່າ ຈັດຕັ້ງການສະເຫຼີມສະຫຼອງວັນດັ່ງກ່າວ.

**ມາດຕາ 50 (ປັບປຸງ) ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີ ເຄື່ອງໝາຍ, ເຄື່ອງແບບ, ຕາປະທັບ, ເຄື່ອງໝາຍ ຊັ້ນ, ເຄື່ອງແບບເຫຼົ່າວິຊາສະເພາະ, ຕາປະທັບ, ບັດປະຈຳການຂອງຕົນ ຊຶ່ງກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ VIII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 51 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ສຳລັບກຳລັງປ້ອງກັນຄວາມສະຫງົບປະຊາຊົນ ທີ່ມີຜົນງານດີເດັ່ນ ໃນການສູ້ຮົບ, ໃນການປະຕິບັດໜ້າທີ່ວິຊາສະເພາະ ແລະ ວຽກງານອື່ນ ຈະໄດ້ຮັບການຍ້ອງຍໍ ເຊັ່ນ ນາມມະຍົດວິລະຊົນ, ນັກຮົບແຂ່ງຂັນ, ຫຼຽນໄຊ, ຫຼຽນກາ, ຫຼຽນພິລາດອາດຫານ, ໃບຍ້ອງຍໍ, ເລື່ອນຊັ້ນ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 52 (ປັບປຸງ) ການປະຕິບັດນະໂຍບາຍ**

ການປະຕິບັດນະໂຍບາຍ ຕໍ່ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີ ດັ່ງນີ້:

1. ນາຍ ແລະ ພົນຕຳຫຼວດ ປະຈຳການ ຈະໄດ້ຮັບເງິນເດືອນ, ເງິນຊັ້ນ, ເງິນຕຳແໜ່ງ, ເງິນໃນການລົງເຄື່ອນໄຫວປະຕິບັດໜ້າທີ່ວິຊາສະເພາະ, ເງິນອຸດໜູນເຂດທຸລະກັນດານ ແລະ ເງິນອຸດໜູນອື່ນ, ເຄື່ອງອຸປະໂພກ, ບໍລິໂພກ ຕາມລະບຽບການ; ສ່ວນນາຍຕຳຫຼວດ ທີ່ເຊົາປະຈຳການ ຈະໄດ້ຮັບບຳນານ ຫຼື ເງິນອຸດໜູນເທື່ອດຽວຕາມລະບຽບການ ເວັ້ນເສຍແຕ່ກໍລະນີທີ່ມີການລະເມີດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບນີ້;

2. ນາຍຕຳຫຼວດ ຜູ້ທີ່ໄດ້ຮັບຫຼາຍຕຳແໜ່ງ ຈະໄດ້ຮັບນະໂຍບາຍ ຕາມຕຳແໜ່ງສູງສຸດ;

3. ນາຍ ແລະ ພົນຕຳຫຼວດ ປະຈຳການ ມີສິດລາພັກປະຈຳປີຕາມລະບຽບການ, ເວັ້ນເສຍແຕ່ໃນກໍລະນີພາວະສຸກເສີນ ຫຼື ສົງຄາມ; ໃນກໍລະນີເກີດພາວະສຸກເສີນ ຫຼື ສົງຄາມ ນາຍ ແລະ ພົນຕຳຫຼວດທີ່ກຳລັງລາພັກຢູ່ນັ້ນ ຕ້ອງກັບຄືນກົມກອງດ່ວນ;

4. ການລາພັກອອກລູກຂອງນາຍ ແລະ ພົນຕຳຫຼວດ ທີ່ເປັນເພດຍິງ ໃຫ້ປະຕິບັດຄືກັນກັບພະນັກງານ-ລັດຖະກອນເພດຍິງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

5. ນາຍ ແລະ ພົນຕຳຫຼວດປະຈຳການ, ພະນັກງານບຳນານ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ຜູ້ເສຍອົງຄະຈະໄດ້ຮັບການເບິ່ງແຍງທາງດ້ານສຸຂະພາບ, ຖ້າມີການເຈັບເປັນຈະໄດ້ຮັບການປິ່ນປົວຕາມນະໂຍບາຍ ທີ່ໄດ້ກຳນົດໄວ້; ສຳລັບນາຍ ແລະ ພົນຕຳຫຼວດ ທີ່ມີການເຈັບເປັນ, ຖືກບາດເຈັບໃນເວລາປະຕິບັດໜ້າທີ່ ຫຼື ຢູ່ເຂດຫຍຸ້ງຍາກທຸລະກັນດານຈະໄດ້ຮັບການປິ່ນປົວ ໂດຍແມ່ນການຈັດຕັ້ງທີ່ກ່ຽວຂ້ອງຮັບຜິດຊອບ;

6. ນາຍ ແລະ ພົນຕຳຫຼວດ ຊຶ່ງເຮັດໜ້າທີ່ສູ້ຮົບ, ຮັບໃຊ້ການສູ້ຮົບຢ່າງພິລະອາດຫານ ຫຼື ປະຕິບັດໜ້າທີ່ສຳເລັດ ຢູ່ເຂດຫຍຸ້ງຍາກທຸລະກັນດານ ຫຼື ເສຍຊີວິດໃນການປະຕິບັດໜ້າທີ່ ຈະໄດ້ຮັບການເລື່ອນຊັ້ນ ຕື່ມໜຶ່ງຊັ້ນ, ຂ້າມຊັ້ນ ຫຼື ຂ້າມຂັ້ນ ແລະ ໃຫ້ນາມມະຍົດຕາມຄວາມເໝາະສົມ, ຖ້າຫາກເສຍ

ຊີວິດໃນເວລາສູ້ຮົບ ຫຼື ຮັບໃຊ້ສູ້ຮົບຢ່າງພິລະອາດຫານ ຈະໄດ້ຮັບການເລື່ອນຊັ້ນໃຫ້ຕື່ມ ສາມຊັ້ນ, ພ້ອມ ເບິ່ງແຍງຄອບຄົວຂອງຜູ້ກ່ຽວ ແລະ ຮັບເອົາລູກຜູ້ທີ່ມີມາດຕະຖານ, ເງື່ອນໄຂເຂົ້າເປັນກຳລັງປ້ອງກັນ ຄວາມສະຫງົບອາຊີບ ຕາມຄວາມເໝາະສົມ;

7. ນາຍ ແລະ ພົນຕຳຫຼວດ ຈະໄດ້ຮັບນະໂຍບາຍໄປຍົກລະດັບວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດ ຖ້າຫາກການໄປຍົກລະດັບວິຊາສະເພາະ ທີ່ໄດ້ຮັບການອະນຸຍາດຈາກກະຊວງປ້ອງກັນ ຄວາມສະຫງົບ ຈະໄດ້ຮັບເງິນເດືອນຕາມຊັ້ນ, ເງິນອຸດໜູນ ແລະ ນະໂຍບາຍອື່ນ ຕາມລະບຽບການ;

8. ນາຍຕຳຫຼວດແຕ່ຊັ້ນພັນເອກລົງມາ ທີ່ອອກຮັບບຳນານ ຈະບໍ່ໄດ້ເລື່ອນຊັ້ນຕື່ມອີກ ແຕ່ຈະໄດ້ ຍົກຂັ້ນເງິນເດືອນຕື່ມໜຶ່ງຂັ້ນ, ນາຍຕຳຫຼວດແຕ່ຊັ້ນພົນຈັດຕະວາ ຫາ ພົນໂທ ທີ່ອອກຮັບບຳນານ ຈະບໍ່ ໄດ້ຍົກຂັ້ນເງິນເດືອນຕື່ມອີກ;

9. ນາຍ ແລະ ພົນຕຳຫຼວດ ທີ່ໄດ້ອອກຈາກກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຊຶ່ງບໍ່ໄດ້ຖືກ ວິໄນຖອນຊັ້ນຂອງຜູ້ກ່ຽວ ໃຫ້ຮັກສານາມມະຍົດຊັ້ນ ຂອງຜູ້ກ່ຽວທີ່ຂັ້ນເທິງຕົກລົງໃຫ້ນັ້ນໄວ້ຄືເກົ່າ;

10. ນາຍ ແລະ ພົນຕຳຫຼວດ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານບຳນານ ຈະໄດ້ ຮັບການເຊື້ອເຊີນເຂົ້າຮ່ວມໃນວັນບຸນສຳຄັນຕ່າງໆຂອງຊາດ ແລະ ມີສິດນຳໃຊ້ເຄື່ອງແບບ, ເຄື່ອງໝາຍ ຍົດ, ໝາຍຊັ້ນຂອງຕົນຄືກັນກັບນາຍ ແລະ ພົນຕຳຫຼວດປະຈຳການ.

ສຳລັບນະໂຍບາຍລະອຽດຕໍ່ນາຍ ແລະ ພົນຕຳຫຼວດປະຈຳການ, ວິລະຊົນແຫ່ງຊາດ, ນັກຮົບ ແຂ່ງຂັນ, ຜູ້ເສຍສະລະຊີວິດ, ຜູ້ເສຍຊີວິດ, ພະນັກງານບຳນານ, ຜູ້ເສຍອົງຄະ, ຄອບຄົວພໍ່ແມ່ຂອງນາຍ ແລະ ພົນຕຳຫຼວດ ທີ່ເສຍສະລະຊີວິດ, ເສຍຊີວິດ ແລະ ກຳລັງເຄິ່ງອາຊີບປ້ອງກັນຄວາມສະຫງົບ ໄດ້ກຳ ນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 53 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ນາຍ ແລະ ພົນຕຳຫຼວດ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 54 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດ ໝາຍສະບັບນີ້.

**ມາດຕາ 55 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ສະບັບເລກທີ 03/ສພຊ, ລົງວັນທີ 2 ກໍລະກົດ 2007.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້